# ສາທາລະນະລັດປະຊາທິປະໄຕ ເຢຍລະມັນ



໗ ຕຸລາ ໑໙໔໙ ຫາ ໗ ຕຸລາ ໑໙໗໙

ສາທາລະນະລັດ ປະຊາທິປະໄຕ ເຢັຽລະມັນ (ສປຢ)

ມີ ອາຍຸ ຄົບ ໓໐ ປີ

ບົດຣຽນ ທີ່ຍິ່ງໃຫຍ່ແຫ່ງການສ້າງຕັ້ງ ສັງຄົມນິຍົມ

ຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ເຢັຽລະມັນ

໑/– ໜ້າວຽກຈຸ້ມຊຸມກຳມະກອນ ............................ ໕

– ຫຼັກການຮ່ວມ ຂອງ ຄອມມຸຍນິດ ແລະຂອງສັງຄົມປະຊາທິປັດ.... ໖

– ການສ້າງຕັ້ງພັກປະຕິວັດ ..............................໗

໒/– ຫຼັກການຮ່ວມ ຂອງທຸກຂະບວນການປະຊາທິປະໄຕ ...........໑໐

– ນະໂຍບາຍພັນທະພາບທາງດ້ານການກໍ່ສ້າງ ...................໑໐

– ໜ້າທີ່ນຳຂອງຈຸ້ມຊຸມກຳມະກອນ ..........................໑໑

໓/– ບັນຫາອຳນາດ ແມ່ນບັນຫາທີ່ຈຳເປັນ ....................໑໓

– ລັດຂອງກຳມະກອນ ແລະ ຂອງຊາວນາ .....................໑໔

– ປ້ອງກັນ ການໂຈມຕີ ຂອງປະຊາຊົນ ......................໑໕

໔/– ການກຳຈັດນາຍທຶນຜູກຂາດ ແລະ ການ
ກ້າວສູ່ການເປັນເຈົ້າຂອງ ຂອງ ລັດ ......................໑໗

– ການເລືອກຕັ້ງ ຕ້ານອຳນາດຜູກຂາດ .......................໑໘

– ການວາງແຜນ ເອກະພາບ ໃນທຸກດ້ານ .....................໑໙

໕/– ພັນທະພາບກັບປະຊາຊົນ ຜູ້ອອກແຮງງານ ..................໒໐

– ທີ່ດິນຂອງເຈົ້າທີ່ດິນໃຫຍ່ ຕໍ່ປະຊາຊົນ .......................໒໐

– ການສ້າງຕັ້ງສະຫະກອນກະເສດຊຸດທຳອິດ.......................໒໑

໖/– ແນວຄິດໃໝ່ຂອງປະຊາຊົນ ...............................໒໓

– ການກຳເນີດ ຂອງການສຶກສາໃໝ່ແຫ່ງຊາດ ...................໒໓

– ການອົບຮົມແນວຄິດໃໝ່ ................................ ໒໔

໗/- <u>ທິດທາງ ແລະ ເປົ້າໝາຍຂອງ ສັງຄົມນິຍົມ</u> ........................ ໔໔

- ການເຕີບໃຫ່ຍທາງດ້ານເສດຖກິດ ຢ່າງ ສເມີຕົ້ນສເມີປາຍ ............ ໔໕

- ຄວາມໝັ້ນຄົງທາງດ້ານວັດຖຸ ............................ ໔໗

໘/- <u>ການເມືອງແຫ່ງຊາດ ແລະ [illegible]ສາກົນຂອງ ພັກ ສັງຄົມນິຍົມ ເອກກະພາບ ເຢັຽລະມັນ</u> ໔໗

- ຄວາມສາມັກຄີກັບທຸກກຳລັງທີ່ກ້າວໜ້າ ,......................... ໔໘

- ຄວາມຈົງຮັກພັກດີຕໍ່ ລັດທິສາກົນກັມມະຊີບ ...................... ໔໙

໙/- <u>ສ້າງພັນທະພາບຢ່າງຕິດແທດກັບສະຫະພາບ ໂຊວຽດ</u> ................ ໕໐

໑໐/- ການສລຸບຜົນງານ ແລະ ລູ່ທາງແຫ່ງການປະຕິວັດ ສັງຄົມນິຍົມ ......... ໕໓

## ບົດຮຽນທີ່ຍິ່ງໃຫຍ່ແຫ່ງການສ້າງຕັ້ງ ສັງຄົມນິຍົມຢູ່ໃນ ສ.ປ.ລ.

ເພິ່ນໄດ້ພາກັນວາງຄຳຖາມອອກມາຫລາຍໆບັນຫາ ກ່ຽວກັບ ສາທາລະນະລັດ ປະຊາທິປະໄຕ ເຢັຽລະມັນ (ສປຢ) ອັນເປັນລັດກັມມະກອນ ແລະ ຊາວນາ ຊຶ່ງໄດ້ສ້າງຕັ້ງ ສັງຄົມນິຍົມ ຂຶ້ນມາເປັນເວລານານໄດ້ ໓໐ ປີ ມາແລ້ວ ເພື່ອຮັບໄຊ້ມະນຸດ . ບັນດາມິດ ສະຫາຍຂອງພວກເຮົາ ຢູ່ໃນໂລກທັງມວນ ໄດ້ພາກັນສົນໃຈຢາກຮູ້ວ່າ ສປຢ ແມ່ນເດີນຕາມເສັ້ນທາງໃດກັນແທ້ ເພື່ອກ້າວຂຶ້ນສູ່ ສັງຄົມນິຍົມ ແລະ ໄດ້ນຳພາການຕໍ່ສູ້ຄືແນວໃດ . ພວກເຂົາເຈົ້າພາກັນສົນໃຈຢາກຮູ້ວ່າຢູ່ໃນ ລັດສັງຄົມນິຍົມ ນັ້ນເພິ່ນຢູ່ກັນແນວໃດ ແລະ ສັງຄົມນິຍົມນຳເອົາຫຍັງແດ່ມາໃຫ້ແກ່ປະຊາຊົນ . ພວກເຂົາເຈົ້າຢາກຮູ້ຈັກວ່າ ພື້ນຖານການພົວພັນກັນຢ່າງຕິດແທດລະຫວ່າງ ສະຫະພາບໂຊວຽດ ແລະ ສປຢ ມີຄືແນວໃດແດ່ , ຖານະບົດບາດ ຂອງ ລັດສັງຄົມນິຍົມ ເຢັຽລະມັນ ທີ່ມີຕໍ່ການຕໍ່ສູ້ ເພື່ອສັນຕິພາບ ແລະ ຢູ່ໃນຂະບວນວິວັດແຫ່ງການປະຕິວັດໂລກມີຄືແນວໃດ . ເມື່ອເວົ້າໂດຍສັງເຂັບແລ້ວ, ເພິ່ນໄດ້ສັງເກດເຫັນມີຫລາຍໆປະເທດໄດ້ໃຫ້ຄວາມສົນໃຈຕໍ່ປະສົບປະການທີ່ຍາດແຍ່ງເອົາມາໄດ້ໂດຍ ສປຢ ໃນໄລຍະແຫ່ງການສ້າງຕັ້ງ ສັງຄົມນິຍົມ ຊຶ່ງໄດ້ຜ່ານພົ້ນມາຕລອດໄລຍະ ໓໐ ປີ.

ບົດຮຽນທີ່ຕັດສິນຊີ້ຂາດຂອງ ສປຢ ກໍ່ຄືການກໍ່ສ້າງ ສັງຄົມນິຍົມ ແລະ ຄວາມກ້າວໜ້າທາງດ້ານການເມືອງ, ເສດຖກິດ , ສັງຄົມ , ການສຶກສາ ແລະ ວັດທະນະທັມ ຊຶ່ງຈາກບົດຮຽນດັ່ງກ່າວນັ້ນມັນໄດ້ເຮັດໃຫ້ທຸກຄົນເປັນເຈົ້າໃນໂຊກຊະຕາຂອງຕົນເອງ ແລະ ເຮັດໃຫ້ຊີວິດຈິດໃຈມີຄຸນສົມບັດຍິ່ງຂຶ້ນ ເພາະວ່າທຸກສິ່ງທຸກຢ່າງທີ່ປະດິດຄິດແຕ່ງຂຶ້ນມາແມ່ນເພື່ອຄວາມສົມບູນພູນສຸກ ແລະ ຄວາມຢູ່ດີກິນດີຂອງພົນລະເມືອງ .

### ໑/- ຄວາມເປັນເອກກະພາບຂອງ ຊົນຊັ້ນກັມມະກອນ

ການສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ເຢັຽລະມັນ ໃນມື້ວັນທີ ໗ ເດືອນ

ຕຸລາ ໑໙໔໙ ແມ່ນເປັນການກະທຳທີ່ມີລັສມີທາງດ້ານປວັດສາດບົນດິນແດນ ເຢັຽລະມັນ .ພາຍຫລັງໄຊຊະນະຂອງກອງທັບໂຊວຽດ ແລະ ກຳລັງປະສົມອື່ນໆ ຕ້ານຕໍ່ພວກຟາດຊິດ ຮິດແລ , ຈັກກະພັດນິຍົມ ເຢັຽລະມັນ ຈຶ່ງໄດ້ກໍ່ຄວາມເສັຽຫາຍໃຫ້ແກ່ປະຊາຊາດ ເອີຣົບ ໃນສົງຄາມໂລກຄັ້ງທີ່ ໒ , ພວກເຂົາກໍ່ໄດ້ຮັບການປະລາໄຊຢ່າງເດັດຂາດເທື່ອໃໝ່ອີກ. ລັດ ເຢັຽລະມັນ ໄດ້ກຳເນີດຂຶ້ນມາຈຶ່ງໃນນັ້ນ ພວກກັມມະກອນ ແລະ ຊາວນາ ເປັນຜູ້ຊົມໃຊ້ອຳນາດ ແລະ ເຄື່ອນໄຫວຕາມລັກສະນະຂອງຍຸກສໄມເຮົາ , ຄືຍຸກສໄມແຫ່ງການຜ່ານຂ້າມຈາກທຶນນິຍົມກ້າວຂຶ້ນສູ່ສັງຄົມນິຍົມ ລະດັບໂລກ ຈຶ່ງໄດ້ເລີ້ມຕົ້ນຈາກມະຫາປະຕິວັດ ສັງຄົມນິຍົມ ເດືອນ ຕຸລາ . ໄຊຊະນະຕໍ່ລັດທິຟາດຊິດ ໄດ້ເຮັດໃຫ້ເກີດມີການຊັ່ງຊາທາງດ້ານກຳລັງໃໝ່ຢູ່ໃນ ເອີຣົບ. ໂດຍສະເພາະແມ່ນຢູ່ໃນ ປະເທດ ເຢັຽລະມັນ , ບັນຫາທີ່ໄດ້ວາງອອກມາກໍ່ຄື ແມ່ນເສັ້ນທາງໃດທີ່ພວກເຮົາຕ້າງສືບຕໍ່ກ້າວເດີນ. ປະຊາຊາດ ໄດ້ພາກັນສ້າງຄວາມຫວັງເອົາໄວ້ວ່າ ສົງຄາມ ແມ່ນບໍ່ອາດສາມາດຈະເກີດຂຶ້ນມາໄດ້ຈັກເທື່ອ ຈາກດິນແດນ ເຢັຽລະມັນ .

ຄວາມຫວັງກໍ່ຄືຄວາມຫວັງ ແຕ່ກ່ອນອື່ນໝົດກໍ່ຕ້ອງທຳລາຍລ້າງ ລັດທິທະຫານຢ່າງປາສຈາກເງື່ອນໄຂ ແລະ ໝູ່ກຳລັງຮຸກຮານຂອງທຶນຜູກຂາດເສັຽກ່ອນ . ຄວາມອາດສາມາດນີ້ຈະເປັນຜົນບັງຄັບໄດ້ຢ່າງເປັນລະບົບ ກໍ່ມີແຕ່ຢູ່ທາງພາກຕະເວັນອອກຂອງປະເທດ ເຢັຽລະມັນເທົ່ານັ້ນ, ພາຍຄວາມວ່າຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ເຢັຽລະມັນ . ໃນນັ້ນ , ຊາວກອມມຸຍນິດ, ພວກສັງຄົມປະຊາທິປັດ ແລະ ອື່ນ ໆ ຕ້ານຕໍ່ ພວກຟາດຊິດ, ໂດຍໄດ້ຮັບຄວາມສະໜັບສະໜູນຈາກພວກນາຍທະຫານແຫ່ງກອງທັບແດງ ໄດ້ພາກັນລົງມືເພື່ອຕ້ານຕໍ່ການປະຕິບັດແບບໂຫດຫ້ຽມຂອງພວກຈັກກະພັດນິຍົມ ເຢັຽລະມັນ . ສຳລັບກຳລັງທັງໝົດດັ່ງກ່າວນັ້ນ ຄຳສັ່ງສອນທີ່ສຳຄັນຂອງປວັດສາດ ເຢັຽລະມັນ ກໍ່ຄືຄວາມຈຳເປັນໃນການສ້າງຄວາມເປັນເອກກະພາບຂອງ ຊົນຊັ້ນກັມມະກອນ ບົນພື້ນຖານປະຕິວັດ . ເພິ່ນໄດ້ສັງເກດເຫັນຢ່າງຂົມຂື່ນກ່ອນການເຂົ້າມາມີອຳນາດ

ຂອງ ພວກຟາດຊິດ , ຈີນຈັ້ນກັນມະກອນ ບໍ່ສາມາດສ້າງຕັ້ງຄວາມເປັນເອກກະພາບກັນໄດ້ ແລະ ຄວາມ ຫ້າວຫັນໃນການຕໍ່ສູ້ຂອງ ຈີນຈັ້ນດັ່ງກ່າວ ແມ່ນໄດ້ຖືກຈ່າຍແຈກແບ່ງແຍກ.

<u>ການກະທຳລ່ວມກັນຂອງ ຊາວກອມມຸຍນິດ ແລະ ພວກສັງຄົມ ປະຊາທິປັດ</u>

ພາຍຫລັງ ວັນທີ່ ໗ ພຶສພາ ໑໙໔໕, ພັກ ກອມມຸຍນິດ ເຢັຽລະມັນ (ກາ.ເປ.ເດ) ໄດ້ ທຳການຮຽກຮ້ອງມາຍັງມະຫາຊົນຢ່າງຮີບດ່ວນ . ເຖິງແມ່ນວ່າ ຊາວກອມມຸຍນິດ ຈະໄດ້ຖືກທຳ ລາຍ ເມື່ອປີ ໑໙໓໓ ຫາ ໑໙໔໕ ຢ່າງຮ້າຍຂາດປານໃດກໍ່ຕາມ, ພັກ ກໍ່ບໍ່ໄດ້ເສື່ອມສະຫລາຍລົງ ແລະ ໄດ້ສືບຕໍ່ການຕໍ່ສູ້ຢູ່ພາຍໃນປະເທດນັ້ນເອງ . ມັນເປັນ ພັກດຽວ ເທົ່ານັ້ນ ຊຶ່ງມີການນຳພາທີ່ຢູ່ໃນສະພາບ ແບບດຳເນີນງານຢູ່ ; ທັນທີທັນໃດ, ພາຍຫລັງການປົດປ່ອຍ ພັກ ກໍ່ສາມາດຟື້ນຟູກິດຈະການເຄື່ອນໄຫວ ຂອງຕົນອອກມາຢ່າງເປີດແປນ . ພ້ອມດຽວກັນນັ້ນ ໃນເດືອນ ພຶສພາ ໑໙໔໕ , ພັກ ສັງຄົມ-ປະຊາ ທິປັດ ເຢັຽລະມັນ ( ແອສ.ເປ.ເດ) ກໍ່ໄດ້ຟື້ນຕົວຂຶ້ນມາເຊັ່ນດຽວກັນ . ໂດຍໄດ້ຮັບບົດຮຽນຈາກການ ຍຶດຄອງຂອງ ຜະເດັດການ ນາຊີ , ໃນເວລານັ້ນ ພວກເຂົາເຈົ້າໄດ້ຖືກທຳລາຍຢ່າງປ່າເຖື່ອນ , ພວກ ສະມາຊິກຂອງ ພັກ ສັງຄົມ ປະຊາທິປັດ ຈຶ່ງມີຫລາຍມຸ່ງມາດປາດຖະໜາຢ່າງແຮງກ້າຢາກເຫັນຄວາມເປັນ ເອກກະພາບ ເວລາພັກໄດ້ປະກອບຂຶ້ນມາໃໝ່ . ສ່ວນກຳລັງຝ່າຍຂວາຊຶ່ງຢູ່ອ້ອມຂ້າງການນຳພາຂອງ ພັກ ໄດ້ພາກັນສືບຕໍ່ຄັດຄ້ານຕໍ່ການກະທຳລ່ວມກັນກັບ ພວກກອມມຸຍນິດ, ບັນດາສະມາຊິກຂອງ ໔ ພັກ ໄດ້ພາກັນຕໍ່ສູ້ຢ່າງຄຽງບ່າຄຽງໄຫລ່ ເພື່ອຜ່ານຜາ ຜົນຮ້າຍຈາກໄພສົງຄາມ ແລະ ແກ້ໄຂບັນຫາເສດກິດ ແລະ ສັງຄົມ . ການປະສົບຜົນສຳເລັດລ່ວມກັນໃນພາລະກິດອັນຮີບດ່ວນໄດ້ປະກອບສ່ວນລົບລ້າງຄວາມ ຄິດອະກຸສົນຕ່າງໆ ອັນເນື່ອງມາຈາກອະດີດ ແລະ ປຸກລະດົມໃຫ້ເກີດມີຄວາມເຂົ້າອົກເຂົ້າໃຈຊຶ່ງກັນ ແລະ ກັນ . ອີກປະການນຶ່ງ, ໂດຍສະເພາະແມ່ນ ຊາວກອມມຸຍນິດ ໄດ້ອອກແຮງທຸກຢ່າງ ເພື່ອຊຸກຍູ້ເຂົ້າໃນ ການຕໍ່ສູ້ ຈຸດທີ່ມີຄວາມເຫັນເປັນເອກກະພາບກັນ ເພື່ອການຟື້ນຟູປະເທດ ແລະ ລົບລ້າງຈຸດທີ່ອາດສາມາດ ສ້າງຄວາມແຕກແຍກກັນຂຶ້ນ . ເມື່ອສິ້ນປີ ໑໙໔໕ ແລະ ເລີ້ມຕົ້ນຂອງປີ ໑໙໔໖ , ພັກ ກອມມຸຍນິດ



ແລະ ສັງຄົມ-ປະຊາທິປັດ ເຢັຽລະມັນ ໄດ້ມີການຮ່ວມມືກັນຢ່າງຕິດແທດນັບຕັ້ງແຕ່ອົງການຈັດຕັ້ງສູນກາງ ໄປຮອດ ອົງການຈັດຕັ້ງພື້ນຖານ . ເນື່ອງຈາກວ່າມີສະພາບການດັ່ງກ່າວ ແລະ ເຈດຕະນາລົມ ໃນພາກການກະທຳລ່ວມ , ເມື່ອເດືອນ ທັນວາ ໑໙໔໕ ບັນດາ ຜູ້ນຳຂອງ ພັກ ກອມມຸຍນິດ ເຢັຽລະມັນ ໓໐ ຄົນ ແລະ ພັກ ສັງຄົມ-ປະຊາທິປັດ ເຢັຽລະມັນ ໓໐ ຄົນ ຈຶ່ງໄດ້ໄຂກອງປະຊຸມກັນຂຶ້ນ, ແລະ ໄດ້ຕັດສິນໃຈທ້າງທາການສ້າງຕັ້ງ ພັກ ເອກກະພາບ ທາງດ້ານ ອຸດົມການ ແລະ ວັດຖຸ . ທັງ ໒ ພັກ ແມ່ນໄດ້ຕົກລົງເຫັນພ້ອມຮ່ວມກັນ ບົນຫລັກການແຫ່ງພື້ນຖານຂອງໂຄງການດຳເນີນງານ ແລະ ກົດຂໍ້ບັງຄັບ .

<u>ການສ້າງຕັ້ງ ພັກປະຕິວັດ</u>

ກອງປະຊຸມໃຫຍ່ ເພື່ອສ້າງຕັ້ງ ພັກ ສັງຄົມນິຍົມ ເອກກະພາບ ເຢັຽລະມັນ (ແອສ.ເອ.ດ) ໄດ້ໄຂຂຶ້ນ ເມື່ອວັນທີ່ ໒ ເດືອນ ເມສາ ໑໙໔໖ ໂດຍມີບັນດາຜູ້ແທນ ໑.໐໕໕ ທ່ານ ເຂົ້າຮ່ວມ ນຳ ໃນນັ້ນ ( ໕໐໗ ຄົນ ແມ່ນ ຄະນະຜູ້ແທນຂອງ ພັກກອມມຸຍນິດ, ໕໔໘ ຄົນ ແມ່ນ ຄນະຜູ້ແທນ ຂອງ ພັກ ສັງຄົມປະຊາທິປັດ ) ບັນດາທ່ານຜູ້ແທນ ທີ່ເຂົ້າມາຮ່ວມປະຊຸມ ໄດ້ຮັບ[illegible]ເປັນ ເອກກະສັນກັນ ເພື່ອສ້າງພັກ ສັງຄົມນິຍົມ ເອກກະພາບ ເຢັຽລະມັນ . ພວກເຂົາເຈົ້າໄດ້ຮັບຕ່ານ ຫລັກການ ແລະ ເປົ້າໝາຍຂອງພັກ , ກົດຂໍ້ບັງຄັບ ແລະ ໃບປະກາດຕໍ່ ປະຊາຊົນ ເຢັຽລະມັນ . ພ້ອມດຽວກັນນັ້ນ ກອງປະຊຸມໃຫຍ່ ໄດ້ຄັດເລືອກເອົາຢູ່ໃນຖັນແຖວຂອງຕົນ ຄະນະກັມມະການບໍລິຫານງານ ຊຶ່ງມີຈຳນວນ ໘໐ ທ່ານ , ນຳພາໂດຍ ປະທານ ໒ ຄົນ ຊຶ່ງມີສິດທິເທົ່າທຽມກັນ ຄື : ສະມາຊິກ ພັກກອມມຸຍນິດ ວິນລຽມ ປີເອັກ ແລະ ສະມາຊິກ ພັກ ສັງຄົມ-ປະຊາທິປັດ ອົດໂຕ ກະໂຣເຕໂວນ. (1)

ບັນດາຫລັກການ ແລະ ຈຸດໝາຍ, ໂຄງການດຳເນີນງານຂອງ ສັງຄົມນິຍົມເອກກະພາບ ເຢັຽລະມັນ ໄດ້ກຳນົດໄວ້ດັ່ງນີ້ :

- ການສ້າງຕັ້ງອຳນາດ ການເມືອງຂອງຊົນຊັ້ນກຳມະກອນ ;
- ການສ້າງຕັ້ງພັນທະພາບຂອງ ຊົນຊັ້ນກຳມະກອນ ກັບ ຊາວອອກແຮງງານອື່ນໆ ;
- ການລົບລ້າງການຂູດຮີດຄົນໂດຍຄົນ ແລະ ການດັດສ້າງ ກຳມະສິດທຶນນິຍົມ ທາງດ້ານ ອຸບປະກອນການຜລິດມາເປັນກຳມະສິດຂອງສັງຄົມ ;
- ການວາງແຜນເສດຖກິດ ;
- ບົດບາດນຳພາຂອງຊົນຊັ້ນກຳມະກອນ ;
- ການມາລວມຕົວກັນຢ່າງຈະແຈ້ງເຂົ້າຢູ່ໃນຫລັກການຂອງສາກົນກຳມະຊີບ .

ຈາກຄວາມຮຽກຮ້ອງຕ່າງໆດັ່ງກ່າວນັ້ນ, ໂຄງການດຳເນີນງານ ຄັ້ງທຳອິດຂອງ ພັກ ສອ໌ ໄດ້ວາງ ອອກຢ່າງໜັກແໜ້ນ ບົນພື້ນຖານຂອງ ລັດທິ ມາກ-ເລນິນ ແລະ ໄດ້ແຕກຕ່າງກັນຢ່າງຈະແຈ້ງກັບ ທັສນະ ຂອງພວກນາຍທຶນນ້ອຍ ແລະ ພວກສວຍໂອກາດ ກ່ຽວກັບ ສັງຄົມນິຍົມ . ພັກ ສອ໌ ໃນສໄມນັ້ນ ມີ ສະມາຊິກ ໑ ລ້ານ ມີ ແສນຄົນ ( ຝ໗໐.໐໐໐ ຄົນ ແມ່ນ ພວກສັງຄົມ-ປະຊາທິປັດ ແລະ ຝ໔໐.໐໐໐ ແມ່ນພວກ ກອມມູນິດ ) ໄດ້ສະແດງອອກຢູ່ໃນໂຄງການດຳເນີນງານວ່າພັກຈະຖືເອົາເປັນແບບຢ່າງ, ບັນດາ ກົດເກນທົ່ວໄປແຫ່ງການປະຕິວັດ ສັງຄົມນິຍົມ ແລະ ການສ້າງຕັ້ງ ສັງຄົມນິຍົມ ຊຶ່ງໄດ້ຜ່ານການ ທົດສອບມາແລ້ວເປັນຢ່າງດີຢູ່ໃນ ສະຫະພາບໂຊວຽດ ເປັນຄັ້ງທຳອິດ ແລະ ໄດ້ນຳພາໄປຮອດບ່ອນ ໄຊຊະນະ . ຄືກັນກັບບັນດາ ພັກ ອ້າຍນ້ອງ ຂອງປະເທດ ສັງຄົມນິຍົມອື່ນໆ , ພັກ ສັງຄົມນິຍົມ ເອກະພາບ ເຢັຽລະມັນ ໄດ້ຖືວ່າການສ້າງຕັ້ງ ສັງຄົມນິຍົມ ແມ່ນມີກົດເກນແບບພາວະວິໄສ, ມີຂີດ ພາຍທີ່ຈຳເປັນ ແລະ ມີລັກສະນະທົ່ວໄປຂອງ ສັງຄົມນິຍົມ , ຖ້າວ່າຫາກປາສຈາກຕົວປັດໄຈດັ່ງກ່າວນັ້ນ ແລ້ວ, ສັງຄົມ ແຫ່ງ ສັງຄົມນິຍົມກໍ່ຈະບໍ່ສາມາດ ສ້າງຕັ້ງຂຶ້ນມາໄດ້ ຫລື ເສີມຂຍາຍອອກໄປ . ແນ່ ນອນກົດເກນທາງດ້ານພາວະວິໄສຢູ່ໃນແຕ່ລະປະເທດນັ້ນ ມັນສະແດງອອກໄດ້ຮູບການສະເພາະ, ໂດຍອີງ ໃສ່ລັກສະນະພິເສດ ຂອງ ປະເທດດັ່ງກ່າວ , ຊຶ່ງບໍ່ແມ່ນເປັນການຜິດຕົວອອກຈາກລັກສະນະທົ່ວໄປ ຂອງ ບັນດາກົດເກນດັ່ງກ່າວ .

ເນື່ອງໃນໂອກາດວັນຄົບຮອບ ໓໐ ປີ ແຫ່ງການສ້າງຕັ້ງພັກ, ເອຣິກຮອນເນັກເກີ ເລຂາ ທິການໃຫຍ່ ຂອງ ຄະນະກຳມະການສູນກາງ ພັກ ສັງຄົມນິຍົມ ເອກະພາບ ເຢັຽລະມັນ ແລະເປັນ ປະທານຂອງ ກອງປະຊຸມລັດ ແຫ່ງ ສປຢ ໄດ້ເວົ້າເຖິງທາດແທ້ຂອງ ພັກ ສອ໌, ຊຶ່ງເປັນພັກແຫ່ງ ກອງ ລະວັງໜ້າຂອງຊົນຊັ້ນກຳມະກອນ :

- " ລັກສະນະເດັ່ນທີ່ສຳຄັນ ຂອງ ພັກ ມາກ-ເລນິນ ກໍ່ຄືຈິດໃຈປະຕິວັດ, ການຄັດຄ້ານ ຢ່າງເດັດດ່ຽວຕໍ່ລະບົບທຶນນິຍົມ, ການຕໍ່ສູ້ ເພື່ອສ້າງຕັ້ງຜະເດັດການກຳມະຊີບ , ການຕໍ່ສູ້ເພື່ອສ້າງຕັ້ງ ສັງຄົມແຫ່ງ ສັງຄົມນິຍົມ, ມັດແໜ້ນ ສາກົນນິຍົມ ຮ່ວມກັນກັບ

ພັກ ກອມມູຍນິດ ສະຫະພາບໂຊວຽດ ແລະ ຂະບວນການ ກອມມູຍນິດໂລກ . ມີສະຕິເທົ່າ ກອງ ລະວັງພ້າຂອງ ຈິນຈຸ້ນກັມມະກອນ , ເປັນພັກ ທີ່ໄດ້ຖືກຊີ້ນຳໂດຍທິສດີປະຕິວັດ ເທົ່າ ລັດທິ ມາກ-ເລນິນ , ຈຶ່ງເປັນການສະແດງອອກເຖິງຄວາມຮູ້ສຶກແບບວິທຍາສາດເທົ່າງຜົນປໂຍດພື້ນຖານຂອງ ຊາວອອກແຮງງານພົດທຸກຄົນ ." ( ໜັງສືພິມ ນິວເດິດຈະແລນ , ແບກແລງ ທີ່ ໔ມີ ມີນາ ໑໙ກ໙) ທຸກສິ່ງທຸກຢ່າງກໍ່ຄືກັນກັບຢູ່ໃນໂຄງການດຳເນີນງານ ຄັ້ງທີ່ນຶ່ງຂອງ ປີ ໑໙໔໙ , ພັກ ສັງຄົມນິຍົມ ເອກກະພາບ ເຢັຽລະມັນ ໄດ້ກຳນົດຢູ່ໃນໂຄງການດຳເນີນງານໃໝ່ຂອງຕົນ ຊຶ່ງໄດ້ຖືກຮັບຜ່ານ ໂດຍ ກອງປະຊຸມໃຫຍ່ ຄັ້ງທີ່ ໙ ເມື່ອເດືອນພຶສພາ ໑໙ກ໙, ອັນໄດ້ວາງທິດທາງໃຫ່ຍ ເທົ່າການ ຕໍ່ສູ້ຂອງຕົນຈົນຮອດພຶດສັດຕະວັດຂອງພວກເຮົາ , ບັນດາຫລັກພື້ນເທົ່າງການກະທຳທີ່ແຕະຕ້ອງບໍ່ໄດ້ ຂອງ ພັກ ມາກ-ເລນິນ ກໍ່ຄື : " ໜ້າທີ່ຂອງ ພັກ ແມ່ນນຳພາ ການຂຍາຍຕົວທາງດ້ານສັງຄົມ ຢູ່ໃນ ສປຢ ໂດຍທາງການເມືອງ , ບົນພື້ນຖານເທົ່າງຍຸດທະສາດ ແລະ ຍຸດໂທບາຍແບບວິທຍາສາດ. ຍິ່ງພາລະກິດເທົ່າງການຄຸ້ມຄອງ ແລະ ການວາງແຜນຂອງຫຼັກສະນະ ແລະ ຂອງທຸລະກິດການ ເທົ່າງຂະບວນວິວັດຂອງ ສັງຄົມ ເພີ້ມທະວີ ແລະ ສັບສົນຂຶ້ນເທົ່າໃດ, ບົດບາດນຳພາການເມືອງຂອງ ພັກ ມາກ-ເລນິນ ຢູ່ໃນສັງຄົມຍິ່ງນັບມື້ເຕີບໃຫ່ຍ . ພັກ ແມ່ນຕາງໜ້າໃຫ້ແກ່ປັດໄຈທີ່ສຳຄັນເທົ່າການ ສ້າງຕັ້ງຂອງ ສັງຄົມ ຢ່າງມີໄຊ ອັນໄດ້ຖືກມອບໝາຍໃຫ້ໂດຍຈິນຈຸ້ນກັມມະກອນ ທີ່ຈະປະເລີດ , ຈິນຈຸ້ນກັມມະກອນ ຈະສຳເລັດພາລະໜ້າທີ່ອັນເປັນປວັດການປະຕິວັດ ແລະ ປະຕິດຄິດຈ້າງ ຂອງຕົນ ໄດ້ນັ້ນກໍ່ຕໍ່ເມື່ອ ພັກ ຂອງ ຕົນ ຊຶ່ງເປັນພັກ ເທົ່າ ກອງລະວັງໜ້າ ທີ່ມີການຈັດຕັ້ງ ແລະ ມີສະຕິ ປະຕິຍາພາລະກິດນຳພາຂອງຕົນ ໃນຖານະເປັນ ອົງການຈັດຕັ້ງສູງສຸດ ຂອງ ຈິນຈຸ້ນ ."

<u>ພັກ ສັງຄົມນິຍົມ ເອກກະພາບ ເຢັຽລະມັນ ປັດຈຸບັນ</u>

ພັກ ສັງຄົມນິຍົມ ເອກກະພາບ ເຢັຽລະມັນ ປັດຈຸບັນ ມີ ສະມາຊິກ ແລະ ຜູ້ສມັກ ເຂົ້າພັກ ຈຳນວນ ໔.໐໗໐.໐໐໐ ຄົນ ໝາຍຄວາມວ່າ ໑/໖ ຂອງ ພົລເມືອງທີ່ມີ ອາຍຸຫລາຍກວ່າ ໑໘ ປີ . ພວກເຂົາເຈົ້າໄດ້ເຕົ້າໂຮມກັນ ຢູ່ໃນ ໗໕.໔໑໑ ຂອງ ອົງການຈັດຕັ້ງ ພື້ນຖານ ແລະ ຈຸລັນຂອງ ວິສາຫະກິດ, ສະຫະກອນການຜລິດການກະເສດ, ສະຖາບັນ ສາທາລະນະ ແລະ ສັງຄົມ, ຄຸ້ມບ້ານ, ໂຮງຮຽນຊັ້ນສູງ ແລະ ໂຮງຮຽນຕ່າງໆ .

- ເປີເຊັນ ຂອງ ຊາວກັມມະກອນ ຢູ່ໃນ ພັກສັງຄົມນິຍົມ ເອກກະພາບ ເຢັຽລະມັນ ແມ່ນມີ ໕໖,໑% ; ມີ໖,໖% ຂອງ ສະມາຊິກ ແລະ ຜູ້ຂໍສມັກເຂົ້າເປັນສະມາຊິກ ແມ່ນພາກັນປະຕິບັດວຽກ ງານຢູ່ໃນການຜລິດ ທາງດ້ານວັດຖຸ . ຈາກເຫລົ່ານັ້ນ ຂອງ ສັງຄົມ , ໗໔,໔% ຂອງ ສະມາຊິກ ແລະ ຜູ້ສມັກຂໍເຂົ້າເປັນ ສະມາຊິກ

- ແມ່ນມາຈາກ ຊົນຊັ້ນກັມມະກອນ .

- ປັດຈຸບັນນີ້ , ໕% ຂອງ ສະມາຊິກພັກ ແລະ ຜູ້ສມັກຂໍເຂົ້າເປັນ ສະມາຊິກ ຂອງ ພັກ ສອຢ ແມ່ນ ຊາວນາ ແຫ່ງ ສະຫະກອນການກະເສດ, ໒໐% ແມ່ນ ພວກປັນຍາຊົນ ແລະ ໑໑,໑% ແມ່ນ ພາລະກອນ .

໒/- <u>ການກະທຳລ່ວມກັນຂອງ ຊາວປະຊາທິປັດ</u> .

ວັນທີ່ ໙ ກຸມພາ ໑໙໔໖ ແມ່ນເປັນມື້ທີ່ຕັດສິນຊີ້ຂາດແຫ່ງການສ້າງຕັ້ງ ຄວາມເປັນເອກກະພາບ ທາງດ້ານປະຕິບັດ ຂອງ ຊົນຊັ້ນກັມມະກອນ . ແມ່ນໃນວັນດຽວກັນນີ້ເອັງທີ່ໄດ້ທຳການຈັດຕັ້ງ ສະຫະພັນ ກັມມະບານ ອິດສລະ ເຢັຽລະມັນ ຂື້ນ , <u>ອັນເປັນອົງການຈັດຕັ້ງເອກກະພາບ ຂອງ ຊົນຊັ້ນກັມມະກອນ</u> , ຊຶ່ງໃນເວລານັ້ນ ມີສະມາຊິກພຽງແຕ່ ໒ ລ້ານຄົນ , ມາຮອດປັດຈຸບັນນີ້ ມັນໄດ້ເພີ້ມຂື້ນເປັນ ໔ ເທົ່າຕົວ. ນອກຈາກ, ການປະຕິບັດສິດທິທັງພົດແຫ່ງການຄຸ້ມຄອງລ່ວມກັນ ຢູ່ໃນວິສາຫະກິດ, ເມື່ອເວລາພົ້ນອອກຈາກຜະເດັດການ ຟາດຊິດໃໝ່ໆ ນັ້ນ ສະຫະພັນກັມມະກອນ ອິດສລະ ເຢັຽລະມັນ ໄດ້ມີພາລະໜ້າທີ່ເຜີຍແຜ່ ຕ້ານຕໍ່ລັດທິຟາດຊິດ ຢູ່ໃນໝູ່ກັມມະກອນ ແລະ ພາລະກອນ ແລະ ໄດ້ທຳການປຸກສຳ ສະຕິຊົນຊັ້ນ. ການສ້າງຕັ້ງບັນດາ ພັກ ປະຊາທິປະໄຕ ສັກດີນາ ຂື້ນມາແມ່ນເປັນຄວາມກ້າວໜ້າທີ່ຕັດສິນຊີ້ຂາດ ເພື່ອການເຕົ້າໂຮມບັນດາກຳລັງ ປະຊາທິປະໄຕ .

- ສະຫະພັນ ຊາວ ກຣິສຕະສາສນາ - ປະຊາທິປັດ ໄດ້ກຳເນີດຂື້ນ ເມື່ອວັນທີ່ ໒໖ ມິຖຸນາ ໑໙໔໕ . ຢູ່ໃນຄວາມຮຽກຮ້ອງໃນວັນປະກອບພັກ ຂື້ນນັ້ນ, ພັກດັ່ງກ່າວ ໄດ້ເຫັນພ້ອມນຳການສ້າງຕັ້ງ ປະຊາທິປະໄຕ ຕ້ານຕໍ່ ຟາດຊິດ ແລະ ໄດ້ທຳການປະກາດ ເຈດຕະນາລົມຂອງຕົນອອກມາ ເພື່ອປະກອບສ່ວນເຂົ້າໃນການນຳເອົາ ອຸດສາຫະກັມທີ່ສຳຄັນຊຶ່ງພວກນາຍທຶນຜູກຂາດເປັນຜູ້ຍຶດຖືນັ້ນ ມາເປັນຂອງຊາດ ແລະ ການປະຕິຮູບທີ່ດິນ .

- ກຸ່ມປະຊາທິປະໄຕ ຂອງ ສັກດີນາອິກຄະນະນື່ງ ໄດ້ກໍ່ຕັ້ງຂື້ນມາ ເມື່ອວັນທີ່ ໕ ກໍລະກົດ ໑໙໔໕ ຄື ພັກ ເສລີປະຊາທິປະໄຕ ເຢັຽລະມັນ . ພັກນີ້ເຫັນພ້ອມນຳການດັດສ້າງ ປະຊາທິປະໄຕ ເອັ້ນດຽວກັນ ແລະ ໄດ້ ລຸກຂື້ນຕ້ານຕໍ່ ລັດທິ ຟາດຊິດ ແລະ ລັດທິ ທະຫານ .

........ ໑໑

ເມື່ອຕົ້ນປີ ໑໙໔໘, ພັກກ້າວໜ້າ ໒ ພັກ ໄດ້ເກີດຂື້ນມາອີກ ຄື : ພັກ ປະຊາທິປັດ-ຊາວນາ ເຢັຽລະມັນ ແລະ ພັກຊາດ-ປະຊາທິປະໄຕ ເຢັຽລະມັນ .

ໂດຍການລິເລີ້ມຂອງ ພັກ ກອມມູຍນິດ, ພວກທີ່ທຳການຕໍ່ຕ້ານ ຟາດຊິດ ໄດ້ເລີ້ມຕົ້ນອອກຂົບ ຂວາຍຊາວໜຸ່ມ , ເພາະວ່າພວກດັ່ງກ່າວນີ້ໄດ້ຖືກຕົວະຍົວະ ແລະ ມີຄວາມສົງໄສຕໍ່ການວິວັດທະນາການ ທາງດ້ານການເມືອງ ພາຍຫລັງການປະລາໄຊຂອງ ພວກ ຟາດຊິດ . ພັກ ກອມມູຍນິດ ໄດ້ຕໍ່ສູ້ເພື່ອ ຈັດຕັ້ງອົງການຊາວໜຸ່ມເຕົ້າໂຮມທຸກທ່າອ່ຽງການເມືອງ ແລະ ທຸກອຸດົມການ ; ຈຸດປະສົງກໍ່ແມ່ນເພື່ອ ອອກແຮງໂຄສະນາຕ້ານຕໍ່ລັດທິ ຟາດຊິດ , ເພື່ອປະຊາທິປະໄຕ, ລັດທິມະນຸສຍະທັມ ແລະ ມິດຕະພາບ ລະຫວ່າງປະຊາຊາດ .

- ແມ່ນບົນຈິດໄຈດັ່ງກ່າວນັ້ນ ຊາວໜຸ່ມອິສລະ ເຢັຽລະມັນ ຈຶ່ງໄດ້ຖືກສ້າງຕັ້ງຂື້ນມາ ໃນມື້ ວັນທີ ໗ ມີນາ ໑໙໔໖ ໂດຍແມ່ນ ເອຣິກຮອນເນັກເກີ ເປັນປະທານ .

- ອົງການຈັດຕັ້ງມະຫາຊົນ ໒ ອົງການ ກໍ່ໄດ້ຈັດຕັ້ງຂື້ນມາອີກ ຄື : ສັນນິບາດ ວັທນະທັມ ເພື່ອການຟື້ນຟູປະຊາທິປະໄຕ ຂອງ ປະເທດ ເຢັຽລະມັນ, ປະທານຄົນທຳອິດແມ່ນ ໂຊຣານ.ຣ. ເບແຊ ນັກຂຽນ ແລະ ສະຫະພັນປະຊາທິປະໄຕແມ່ຍິງ ເຢັຽລະມັນ (ສ(ກ(ມ.ຢ )

## ນະໂຍບາຍພັນທະພາບແບບກໍ່ສ້າງ

ທຸກພັກ ແລະ ທຸກອົງການຈັດຕັ້ງມະຫາຊົນ ທີ່ກຳເນີດຂື້ນມານັ້ນໄດ້ຕໍ່ສູ້ລ່ວມກັນຢູ່ພາຍໃນ ກຸ່ມຂອງ ບັນດາ ພັກ ຕ້ານຕໍ່ ຟາດຊິດ ແລະ ເພື່ອປະຊາທິປະໄຕ , ຊຶ່ງກຸ່ມດັ່ງກ່າວໄດ້ສ້າງຂື້ນມາເມື່ອ ເດືອນ ກໍລະກົດ ໑໙໔໕ ຕາມຄຳສເນີຂອງ ພັກ ກອມມູຍນິດ ; ບັນດາພັກ ໄດ້ຮັກສາໄວ້ຊຶ່ງທຸກການປົກຄອງ ຕົນເອງ . ກຸ່ມມີພາລະໜ້າທີ່ເຮັດໃຫ້ຊາວປະຊາທິປັດທັງມວນທີ່ເຈດຕະນາດີ ສາມາດປະກອບສ່ວນເຂົ້າ ໃນການສ້າງຕັ້ງປະຊາທິປະໄຕ ຕ້ານຕໍ່ ຟາດຊິດ .

ພັນທະພາບທາງການເມືອງດັ່ງກ່າວນີ້ເມື່ອກ່ອນນັ້ນແມ່ນໄດ້ຖືກສົ້ງເສີມໂດຍ ພັກ ກອມມູຍນິດ ແລະ ຕໍ່ມາກໍ່ແມ່ນ ພັກ ສອຢ .ຍ້ອນການວິໄຈສັມນິດ ບັນດາບັນຫາການເມືອງ, ເສດຖິດ, ການສຶກສາ ແລະ ວັທນະທັມ ພາຍໃນກຸ່ມຂອງບັນດາ ພັກ ຕ້ານຟາດຊິດ ແລະ ເພື່ອປະຊາທິປະໄຕ ຊຶ່ງໃນນັ້ນ ແຕ່ລະ ພັກແມ່ນມີສິດທິເທົ່າທຽມກັນ, ມັນເປັນສິ່ງທີ່ເປັນໄປໄດ້ໃນການນຳເອົາບັນດາຊົນຊັ້ນ ແລະ ຊັ້ນຄົນທີ່ອອກ ແຮງງານຊຶ່ງນອກຈາກຊົນຊັ້ນກັມມະກອນເພື່ອມາປະກອບສ່ວນເຂົ້າ ໃນການດັດສ້າງຕ້ານຕໍ່ ຟາດຊິດ ແລະ

ເພື່ອປະຊາທິປະໄຕ, ສົ່ງເສີມພລັງທີ່ກ້າວໜ້າຂອງບັນດາ ພັກ ປະຊາທິປະໄຕ ສັກດີນາ ແລະ ລ້ອມ ປ່ຽວ ວົງການປະຕິການ . ກຸ່ມປະຊາທິປັດຂອງບັນດາ ພັກ ແລະ ຂອງອົງການຈັດຕັ້ງມະຫາຊົນ ໄດ້ຮັກສາບົດບາດຂອງຕົນໄວ້ຢູ່ໃນລະບົບປະຊາທິປະໄຕ ສັງຄົມນິຍົມຢູ່ໃນ ສປຢ, ຊຶ່ງປະກອບດ້ວຍ ດັ່ງນີ້ :

- ພັກ ສອຢ ( ມີສະມາຊິກ ໔.໐໗໐.000 ຄົນ )
- ພັກ ປະຊາທິປະໄຕ-ຊາວນາ ເຢັຽລະມັນ, ພັກ ສະຫະພັນກຣິສຕະສາສນາ-ປະຊາທິປັດ, ພັກເສລີປະຊາທິປະໄຕ ເຢັຽລະມັນ ແລະ ພັກຊາດ-ປະຊາທິປະໄຕ ເຢັຽລະມັນ ມີສະມາຊິກທັງມົດ ໓໕໐.000 ຄົນ .
- ອົງການຊາວໜຸ່ມ ເຢັຽລະມັນ ມີສະມາຊິກ ໔.໑໐໐.000 ຄົນ
- ສະຫະພັນ ປະຊາທິປະໄຕ ແມ່ຍິງ ເຢັຽລະມັນ ໑.໖00.000 ຄົນ
- ສັນນິບາດ ວັດທະນະທັມແຫ່ງ ສປຢ ໔໐໗.000 ຄົນ
- ສະຫະພັນ ກັມມະບານອິສລະ ເຢັຽລະມັນ ໗.໖00.000 ຄົນ .

ບັນດາຜູ້ນຳຂອງ ພັກ ແລະ ຂອງ ອົງການຈັດຕັ້ງມະຫາຊົນດັ່ງກ່າວໄດ້ອິໄຈທຸກບັນຫາອັນເປັນພື້ນຖານ ລ່ອມກັນທາງດ້ານ ການເມືອງພາຍໃນ ແລະ ຕ່າງປະເທດຂອງ ສປຢ. ການເຝິກສາຫາລືດັ່ງກ່າວ ແມ່ນເພື່ອແນໄສ່ເພື່ອຖ່າຍຖອນເຈດຕະນາລົມລ່ອມກັນ ເພື່ອເຮັດໃຫ້ການເມືອງທີ່ສ້າງຂຶ້ນບົນພື້ນຖານ ແຫ່ງຜົນປໂຍດຂອງ ປະຊາຊົນທັງມວນປະສົບຜົນສຳເລັດ .

<u>ບົດບາດນຳພາຂອງ ຊົນຊັ້ນກັມມະກອນ</u>

ບັນດາປະສົບປະການ ຂອງ ສປຢ ໄດ້ຊີ້ໃຫ້ເຫັນວ່າ ເອກກະພາບຂອງຊົນຊັ້ນກັມມະກອນ ແມ່ນເປັນພື້ນຖານອັນແໜ້ນແຟ້ນສຳລັບການສ້າງຕັ້ງພັນທະພາບທີ່ກວ້າງໃຫຍ່ກັບຊົນຊັ້ນ ແລະ ຊັ້ນຄົນອື່ນໆ, ອັນເປັນພັນທະພາບຂອງທຸກກຳລັງປະຊາທິປະໄຕຂອງປະຊາຊົນ. ນະໂຍບາຍສ້າງພັນທະພາບໄດ້ເຮັດ ໃຫ້ ລັດທິ ເລນິນ ແຫ່ງຄວາມເປັນເຈົ້າອຳນາດຂອງຊົນຊັ້ນກັມມະຊີບປະສົບຜົນສຳເລັດ ຕາມເງື່ອນໄຂ ແຫ່ງຊາດສະເພາະຂອງພວກເຮົາ . ນະໂຍບາຍພັນທະພາບແມ່ນແຕກຕ່າງກັນຂັ້ນຮາກຖານ ກັບ ນະໂຍບາຍຂອງ ສັງຄົມ-ປະຊາທິປັດ ແຫ່ງຄວາມສາມັກຄີ ແລະ ການມີຫລາຍພັກຫລາຍຝ່າຍແບບ ສັກດີນາ . ນະໂຍບາຍດັ່ງກ່າວນັ້ນແມ່ນເອື່ອຍອີງໃສ່ແນວຄິດຂອງ ເລນິນ ຊຶ່ງໄດ້ເວົ້າວ່ານະໂຍບາຍ ແຫ່ງພັນທະພາບແມ່ນເປັນຄວາມຈຳເປັນສຳລັບ ພັກ ປະຕິວັດ ຂອງ ຊົນຊັ້ນກັມມະກອນ ເພື່ອສ້າງຕັ້ງ ແລະ ປັບປຸງສັງຄົມນິຍົມ ໃຫ້ແໜ້ນແຟ້ນ. ເອຣິດຣອນເນັກເກີ ໄດ້ໃຫ້ຂໍ້ສັງເກດດັ່ງນີ້ : " ບົນຈິດໃຈ ດັ່ງກ່າວນັ້ນ ພັກເຮົາ ໄດ້ສຳເລັດການສ້າງຕັ້ງສາຍພົວພັນແຫ່ງການຮ່ວມມືສນິດ ແລະ ປະດິດຄິດສ້າງ ຢ່າງສນິດແໜ້ນ ແລະ ພົ້ນຄົງ ລະຫວ່າງຊົນຊັ້ນກັມມະກອນ; ຊາວນາ ສະຫະກອນການກະເສດ ,

ປັນຍາຊົນ ແລະ ຊາວອອກແຮງງານອື່ນໆ . ສາຍພົວພັນອັນສນິດແໜ້ນນັ້ນນັບໄດ້ຝັງລົງເລິກ ໃນໄລຍະແຫ່ງການສ້າງຕັ້ງຢ່າງຕໍ່ເນື່ອງຂອງ ສັງຄົມແຫ່ງສັງຄົມນິຍົມ ຂຍາຍຕົວ ແລະ ການສ້າງຕັ້ງເງື່ອນໄຂເພື່ອການຜ່ານຂ້າມເທື່ອລະກ້າວຂຶ້ນສູ່ ກອມມຸຍນິດ ."

໓/- <u>ບັນຫາອຳນາດ ແມ່ນເປັນບັນຫາສຳຄັນ</u>

- ການປະກອບ ແລະ ການຂຍາຍຕົວຂອງ ພັກ ສອຢ, ຊຶ່ງເປັນພັກ ມາກ-ເລນິນ ເພື່ອການຕໍ່ສູ້ ແລະຄວາມສາມັກຄີກັບໝູກກຳລັງທີ່ກ້າວໜ້າ ແລະ ປະຊາທິປະໄຕຂອງ ປະຊາຊົນ ໄດ້ສ້າງຫລາຍເງື່ອນໄຂທີ່ຈຳເປັນ ເພື່ອການພິຊິດອຳນາດທາງດ້ານການເມືອງ ໂດຍຊົນຊັ້ນກັມມະກອນ ແລະ ຊາວນາທີ່ຄູ່ພື້ນ .

- ພາຍຫລັງສົງຄາມໄດ້ສີ້ນສຸດລົງ, ທັນທີທັນໄດນັ້ນ, ການປົກຄອງປະຊາທິປະໄຕຈຳນວນນຶ່ງໄດ້ເກີດຂື້ນຢູ່ໃນເມືອງ ແລະ ໝູ່ບ້ານ; ຊຶ່ງປະກອບດ້ວຍ ຊາວກອມມຸຍນິດ, ພວກສັງຄົມປະຊາທິປັດ ແລະ ພວກອື່ນໆທີ່ຕ້ານຕໍ່ ລັດທິ ຟາດຊິດ, ພວກເຂົາເຈົ້າໄດ້ປະເຊີນກັບຫລາຍບັນຫາອັນຮີບດ່ວນລ່ວມກັນ ເພື່ອເຮັດໃຫ້ຊີວິດເປັນປົກກະຕິ . ອົງການປົກຄອງໄດ້ປະສົບຜົນສຳເລັດຫລາຍສີ່ງຫລາຍຢ່າງ ຊຶ່ງປາກົດວ່າຈະບໍ່ຕລອດລອດຝັ່ງ ແລະ ໄດ້ຊ່ວຍເຫລືອຫລາຍຄົນໃຫ້ກ້າວໜ້າ ແລະ ກັບກາຍມາເປັນ ນັກຈັດຕັ້ງ ແລະ ຕາງໜ້າໃຫ້ແກ່ກິຈການທ້ອງຖິ່ນ .

- ພັກງານໃໝ່ ໄດ້ກໍ່ສ້າງຂື້ນ, ພວກເຂົາເຈົ້າແມ່ນເປັນປັດໄຈພື້ນຖານແຫ່ງການປົກຄອງປະຊາທິປະໄຕ ຢູ່ໃນແຂວງຕ່າງໆຂອງ ເຢຍລະມັນ ຕະເວັນອອກຊຶ່ງເຕົ້າໂຮມບຸກຄົນທີ່ໄດ້ຖືກກົດຂີ່ມາກ່ອນໂດຍ ບັນດາພັກຕ້ານຕໍ່ ຟາດຊິດ ເພື່ອປະຊາທິປະໄຕ . ບັນດາປະທານ, ຮອງປະທານ ແຫ່ງອຳນາດການປົກຄອງຂອງເມືອງແລະ ແຂວງ ເທື່ອທຳອິດນັ້ນ ຜູ້ ຄົນ ແມ່ນມາຈາກ ພັກ ກອມມຸຍນິດ, ຜູ້ ຄົນມາຈາກ ພັກ ສັງຄົມປະຊາທິປັດ , ຜູ້ ຄົນ ມາຈາກ ພັກ ປະຊາທິປະໄຕສັກດິນາ ແລະ ໔ ຄົນ ບໍ່ສັງກັດພັກ .

- ພາຍຫລັງການສ້າງຕັ້ງ ສປຢ ຂື້ນ , ບັນດາອົງການຈັດຕັ້ງຂອງ ລັດ ໄດ້ສືບຕໍ່ປະກອບຂື້ນຕາມແບບສະບັບ ທີ່ເຮັດໃຫ້ໝູກກຳລັງຂອງ ປະຊາຊົນໄດ້ປະກອບສ່ວນນຳ .

ເມື່ອປີ ໑໙໔໙ ໃນຈຳນວນຜູ້ແທນ ໓໓໐ ທ່ານ ຂອງ ສະພາປະຊາຊົນຈຳນວນທີ່ນັ້ນໄດ້ແບ່ງປັນອອກໄປດັ່ງນີ້ : ພັກ ສອຢ ໄດ້ ໙໖ ທີ່ນັ່ງ , ພັກ ເສລີ ປະຊາທິປະໄຕ ແລະ ພັກ ສະຫະພັນ

ກຣິສຕະສາສນາ-ປະຊາທິປັດ ແຕ່ລະພັກ ໄດ້ ໔໖ ທີ່ນັ່ງ, ພັກຊາດປະຊາທິປະໄຕ ໄດ້ ໑໗ ທີ່ນັ່ງ ແລະ ພັກ ປະຊາທິປັດ-ຊາວນາ ໄດ້ ໑໕ ທີ່ນັ່ງ . ສ່ວນສະຫະພັນກັມມະບານອິສລະ ເຢັຽລະມັນ ແລະ ຊາວໜຸ່ມອິສລະ ເຢັຽລະມັນ ແລະ ອົງການຈັດຕັ້ງມະຫາຊົນອື່ນໆ ໄດ້ແບ່ງປັນກັນໃນສ່ວນທີ່ຍັງເຫລືອ . ປັດຈຸບັນນີ້ , ສະພາປະຊາຊົນມີຜູ້ແທນ ໕໐໐ ທ່ານ ໃນນັ້ນ ໑໒໗ ທີ່ນັ່ງເປັນຂອງ ພັກ ສອຍ , ສ່ວນ ພັກ ປະຊາທິປັດ-ຊາວນາ , ພັກເສລີປະຊາທິປະໄຕ, ພັກ ກຣິສຕະສາສນາ-ປະຊາທິປັດ ແລະ ພັກຊາດປະຊາທິປະໄຕ ນັ້ນແຕ່ລະພັກ ໄດ້ ໕໒ ທີ່ນັ່ງ , ສະຫະພັນກັມມະບານອິສລະ ເຢັຽລະມັນ ໄດ້ ໖໘ ທີ່ນັ່ງ , ສະຫະພັນປະຊາທິປະໄຕແມ່ຍິງ ເຢັຽລະມັນ ໄດ້ ໓໕ ທີ່ນັ່ງ ຊາວໜຸ່ມອິສລະ ເຢັຽລະມັນ ໄດ້ ໔໐ ທີ່ນັ່ງ ແລະ ສັນນິບາດວັທນະທັມ ໄດ້ ໒໒ ທີ່ນັ່ງ .

<u>ລັດ ຂອງ ຊາວກັມມະກອນ ແລະ ຊາວນາ</u>

ມາຕາ ນຶ່ງ ແຫ່ງລັດຖທັມມະນູນຂອງ ສປຢ ໄດ້ບັນຍັດໄວ້ວ່າ : " ສປຢ ແມ່ນ ລັດ ສັງຄົມນິຍົມ ກັມມະກອນ ແລະ ຊາວນາ . ມັນແມ່ນອົງການຈັດຕັ້ງທາງດ້ານການເມືອງ ຂອງ ຊາວອອກແຮງງານ ຢູ່ໃນເມືອງ ແລະ ຊົນນະບົດ ໄຕ້ການນຳພາຂອງຊົນຊັ້ນກັມມະກອນ ແລະ ພັກ ມາກ-ເລນິນ ຂອງ ຕົນ ."

ມາຕາ ໒ : " ຢູ່ທີ່ ສປຢ, ອຳນາດທັງໝົດແມ່ນ ຊາວອອກແຮງງານຢູ່ໃນເມືອງ ແລະ ຊົນນະບົດ ເປັນຜູ້ຊົມໄວ້ ."

<u>ຊົນຊັ້ນກັມມະກອນ</u> ແມ່ນເປັນກຳລັງນຳພາຂອງ ສັງຄົມ ແຫ່ງ ສັງຄົມນິຍົມ . ຊົນຊັ້ນ ດັ່ງກ່າວ ປະຕິບັດບົດບາດນຳພາຂອງຕົນໂດຍຜ່ານ ພັກ ສອຍ . ບັນດາສະພາ ແລະ ພະແນກການຂອງ ລັດ ແມ່ນ ປະກອບດ້ວຍກັມມະກອນສະເພາະ . ເປີເຊັນຂອງ ກັມມະກອນ ຢູ່ໃນຂແໜງງານຕ່າງໆມີດັ່ງນີ້ :

- ຢູ່ໃນສະພາປະຊາຊົນ ມີ ໕໗%
- ສະມາຊິກ ສຳນັກງານຕາງໜ້າປະຊາຊົນທ້ອງຖິ່ນ ໖໐%
- ພນັກງານນຳພາ ເສຖກິດ ສັງຄົມນິຍົມ ໗໕%
- ໄອຍະການສານ ໘໒%
- ຫົວໜ້າສານ ໗໔%

ຊາວອອກແຮງງານຫລາຍລ້ານຄົນ ໄດ້ເຂົ້າຮ່ວມໃນການຄຸ້ມຄອງລັດ ແລະ ເສຖກິດໂດຍກົງ :

- ບັນດາ ຄນະກັມມາທິການ ແລະ ຄນະເຮັດວຽກ ຂອງ ສຳນັກງານຕາງໜ້າໃຫ້ແກ່ ປະຊາຊົນທ້ອງຖິ່ນ ມີ ອາສາສມັກລວມທັງໝົດ ໕໕໐.໐໐໐ ຄົນ ຊຶ່ງເປັນອົງການຊ່ວຍ ວຽກຂອງ ຜູ້ແທນລາສດອນ . ສະພາ ຂອງ ພໍ່ແມ່ນັກຮຽນ ມີ ສະມາຊິກທີ່ຖືກຮັບເລືອກ

ຕັ້ງເຖິງ ໓໐໐.໐໐໐ ຄົນ , ພວກດັ່ງກ່າວແມ່ນປະກອບສ່ວນຊ່ວຍເຫລືອໃນວຽກງານການສຶກສາຂອງໂຮງຮຽນ .

- ຢູ່ໃນພາກສ່ວນຍຸດຕິທັມ ພ້ອມທັງການກວດກາ ສາທາລະນະ ແລະ ສັງຄົມ , ມີ ສະມາຊິກ ພິພາກສາຂອງສານປະຊາຊົນ ປະຈຳຕາແສງ ແລະ ເມືອງ ໔໗.໘໓໐ ຄົນ ຄນະກັມມາທິການ ຕັດສິນປະຈຳຄຸ້ມບ້ານ , ເມືອງ , ຫູ່ບ້ານ, ແລະ ສາຫະກອນການຜລິດ ການກະເສດ ມີ ສະມາຊິກທີ່ໄດ້ຖືກຮັບເລືອກຕັ້ງ ໕໕.໕໐໐ ຄົນ . ຄນະກັມມາທິການ ກວດກາກັມມະກອນ ແລະ ຊາວນາ ປະກອບດ້ວຍ ຊາວອອກແຮງງານ ໑໗໔.໐໐໐ ຄົນ .

- ໃນພາກສ່ວນເສດຖະກິດ ສັງຄົມນິຍົມ, ສະມາຊິກ ກັມມະບານ ໑.໘໐໐.໐໐໐ ຄົນ ແມ່ນມີໜ້າທີ່ຮັບຜິດຊອບໃນຖານະເປັນ ຄນະຜູ້ແທນ . ສະມາຊິກ ກັມມະບານ ຫລາຍແສນຄົນ ໄດ້ມີໜ້າທີ່ເປັນສາລະວັດ ກັມມະກອນ , ສະມາຊິກຂອງ ຄນະກັມມະການຊາວໜຸ່ມ, ແມ່ຍິງ ແລະ ອົງການ ປະຊາທິປະໄຕອື່ນໆ ເພື່ອການຄຸ້ມຄອງລວມກັນ .

ບົດຮຽນອັນເປັນພື້ນຖານທີ່ສຳຄັນຊຶ່ງພວກເຮົາໄດ້ປະຕິບັດມາໃນໄລຍະເພື່ອການຂຍາຍຕົວຂອງ ລັດ ສັງຄົມນິຍົມ ກັມມະກອນ ແລະ ຊາວນາກໍ່ຄືອຳນາດ ການເມືອງຂອງຊົນຊັ້ນກັມມະກອນ, ສິ່ງດັ່ງກ່າວບໍ່ໄດ້ເຮັດໃຫ້ການຄຸ້ມຄອງລວມກັນແບບປະຊາທິປະໄຕຂອງ ພົລເມືອງ ມີຂີດຂາດ, ລັດທອນລົງແຕ່ຢ່າງໃດ ຕົງກັນຂ້າມ ມາຮອດປັດຈຸບັນນີ້ ມັນຍິ່ງໄດ້ຖືກຍົກຂຶ້ນສູ່ລະດັບສູງຢ່າງບໍ່ເຄີຍມີມາ . ເນື່ອງຈາກວ່າ ໂດຍທົ່ວໄປແລ້ວ , ຜົນປໂຍດຂອງ ຊົນຊັ້ນກັມມະກອນ ມັນໄດ້ມາບັນຈົບກັນກັບຜົນປໂຍດ ຂອງ ຊາວອອກແຮງງານທັງໝົດ , ການສ້າງຕັ້ງ ສັງຄົມນິຍົມ ແມ່ນອຳນວຍຄວາມສະດວກຢ່າງໃຫຍ່ຫລວງໃຫ້ແກ່ພົລທຸກຄົນ ເພື່ອເຂົ້າຮ່ວມໃນພາລະກິດຂອງລັດ , ພ້ອມທັງການແຜດອກອອກຜົນເພື່ອແນວຄິດລິເລີ້ມເພື່ອເຮັດໃຫ້ບັນດາຈຸດພາຍປ່າຍທາງທີ່ໄດ້ວາງອອກນັ້ນປະສົບຜົນສຳເລັດ ແລະ ພົລທຸກຄົນຕ່າງໄດ້ຮັບຜົນປໂຍດ .

## ການພິທັກຮັກສາພາກພົນ ເພື່ອການພິຈິດຂອງປະຊາຊົນ

ການສ້າງຕັ້ງ ແລະ ການພັດທະນາ ສປຢ ແມ່ນເປັນການປະລາໄຊເທື່ອໃໝ່ຢ່າງຮ້າຍແຮງໃຫ້ແກ່ຈັກກະພັດນິຍົມ ເຢັຽລະມັນ, ຊຶ່ງຍາມໃດ ພວກເຂົາກໍ່ໄດ້ທຳການຄັດຄ້ານຕໍ່ຂະບວນວິວັດເພື່ອການປະຕິວັດ ຢູ່ໃນພາກຕະເວັນອອກຂອງ ເຢັຽລະມັນ . ນັບຕັ້ງແຕ່ມື້ທີ່ ສປຢ ໄດ້ລະຖາປະນາຂຶ້ນມານັ້ນ, ສປຢ ໄດ້ເປັນເປົ້າໝາຍໃຫ້ແກ່ການປິດລ້ອມທາງດ້ານເສດຖະກິດ , ການເກາະເອົາກຳໄລຕໍ່ການຂຶ້ນລາຄາ

ข้อ ......

ข้อ ......

ข้อ ......

ຂອງເງິນຕາ, ການປິດລ້ອມທາງດ້ານການທູດ , ການບ້າງເພທຳລາຍຕ່າງໆມີການຈັດຕັ້ງ, ການໂຄສະນາຍາດແຍ່ງໃຫ້ພວກ ກັມມະກອນວິຊາສະເພາະ, ນັກຊ່ຽວຊານ ແລະ ນັກວິທຍາສາດໃຫ້ເຕັ້ນໂຕນໜີຍົບໜີໂດຍພວກສັດຕູຂອງ ປະຊາທິປະໄຕ ແລະ ສັງຄົມນິຍົມ ສິ່ງດັ່ງກ່າວໄດ້ສ້າງເສັຽຫາຍຕ່າງໆນັກພວງໃຫ້ແກ່ພວກເຮົາ . ດ້ວຍການຊຸກຍູ້ຈາກຄວາມປ່ອງບ່າ , ພວກເຂົາແມ່ນບໍ່ໄດ້ມີການຄິດພ້າຄິດຫລັງທຳການຄາດຕະກັມຢ່າງປ່ອງບ່າຕໍ່ພວກຍາມຮັກສາສາຍແດນຂອງພວກເຮົາ. ເມື່ອປີ ໑໙໕໘ ແລະ ໑໙໖໑, ພວກຈັກກະພັດນິຍົມ ເຢັຽ ສາທາລະນະລັດ ສະຫະພັນ ເຢັຽລະມັນ ກໍ່ໄດ້ໄຂສາກບຸກໂຈມຕີໂດຍກົງ ໔ ຄັ້ງແບບຝືນປະຕິວັດຈາກແຫຼງແລງຕະເວັນຕົກ , ໃນຈຸດປະສົງ ເພື່ອໂຄ່ນລົ້ມດ້ວຍກຳລັງອຳນາດຂອງກັມມະກອນ ແລະ ຊາວນາບົນດິນແດນ ເຢັຽລະມັນ ແລະ ເອົາ ສປຢ ໄປຢູ່ໃຕ້ການຄອບງຳ . ດັ່ງໃຫ້ເຂົ້າໃຈວ່າ, ເມື່ອ ສັງຄົມນິຍົມ ໄດ້ສ້າງຕັ້ງຂຶ້ນແລ້ວຢູ່ໃນ ສປຢ, ມາຮອດ ປີ ໑໙໖໑ ການກວດກາສາຍແດນລະຫວ່າງ ສປຢ ແລະ ສສຢ ແລະ ກັບ ແຫຼງແລງ ຕະເວັນຕົກຊຶ່ງເປັນເຂດຂອງນາຍທຶນແມ່ນບໍ່ໄດ້ມີການກວດກາຫຍັງທັງໝົດ. ການບຸກໂຈມຕີຕ່າງໆຂອງພວກ ຈັກກະພັດນິຍົມ ໄດ້ສິ້ນສຸດລົງພາຍຫລັງ ສປຢ ໄດ້ຈັດຕັ້ງການກວດກາຂຶ້ນຢ່າງເຂັ້ມງວດທາງດ້ານສາຍແດນຕິດຕໍ່ກັບ ສສຢ ແລະ ແຫຼງແລງ ຕະເວັນຕົກ . ເຖິງຢ່າງນັ້ນກໍ່ດີ, ພວກປະຕິກິຣິຍາ ຈັກກະພັດນິຍົມ, ພວກຕ້ານຕໍ່ ກອມມູນິດ ແລະ ພວກທີ່ຫວັງເກົ່າແຄ້ນບັງບໍ່ໄດ້ລົດລະຕໍ່ຄວາມພຍາຍາມເພື່ອລົບກວນແບ່ງແຍກ ແລະ ໃສ່ຮ້າຍປ້າຍສີຕໍ່ການພິຊິດຂອງ ພົລເມືອງແຫ່ງ ສປຢ . ນັບຕັ້ງແຕ່ ປີ ໑໙໗໐ ເປັນຕົ້ນມາເພິ່ນໄດ້ບັນທຶກການລະເມີດຕໍ່ສາຍແດນຫລາຍກວ່າ ໓.໐໐໐ ຄັ້ງ . ບໍ່ເວັ້ນແຕ່ລະວັນ, ກຳລັງທີ່ເປັນປໍລະປັກຕໍ່ການຜ່ອນຄາຍຄວາມເຄັ່ງຕຶງໄດ້ອອກເຫການໂຄສະນາໃສ່ຮ້າຍປ້າຍສີ ແລະ ການຕົວະຫລອກຕ່າງໆເປັນການໃກ່ຍລົງໃສ່ ສປຢ ສັງຄົມນິຍົມ ເພື່ອທຳລາຍໝາກຜົນແຫ່ງການພິຊິດຂອງປະຊາຊົນໂດຍການແຊກຄຸມທາງດ້ານອຸດົມການ . ເມື່ອເປັນຄືແນວນັ້ນ, ການມີສະຕິລະວັງຕົວປະຕິວັດ ແລະ ເຈດຕະນາລົມ ເພື່ອປ້ອງກັນບັນດາໝາກຜົນແຫ່ງການພິຊິດທັງໝົດ ຕ້ານຕໍ່ທຸກການທຳລາຍ ແລະ ທຸກການຄຸກຄາມທີ່ມາຈາກພາຍນອກແມ່ນເປັນສິ່ງທີ່ຈຳເປັນ . ນັກ ຂອງຈິນຈຸ້ມກັມມະກອນ ແລະ ລັດກັມມະກອນ ແລະ ຊາວນາ ຍາມໃດກໍ່ໄດ້ພຍາຍາມ ເພື່ອປ້ອງກັນ ແລະ ປົກປັກຮັກສາການປະຕິວັດຢ່າງມີປະສິດທິພາບໃນທຸກສະພາບການ . ເມື່ອປີ ໑໙໔໘ , ເພິ່ນໄດ້ເລີ້ມຕົ້ນສ້າງກຳລັງຕຳຫລວດໃໝ່ຂຶ້ນ ຊຶ່ງປະກອບດ້ວຍ ພວກຕ້ານຕໍ່ ຟາດຊິດຢ່າງແທ້ຈິງຊຶ່ງໄດ້ສະແດງອອກຢູ່ໃນການຕໍ່ສູ້ຕ້ານຕໍ່ ພວກຟາດຊິດ ຢູ່ໃນຄຸກ , ຄ້າຍກັກກັນ ແລະ ອົພຍົບໜີໄປຢູ່ຕ່າງປະເທດ . ໃນສໄມນັ້ນ ໗໔% ຂອງຕຳຫລວດ ແມ່ນມາຈາກພົລເມືອງທີ່ດຸໝັ່ນ, ໒໖% ແມ່ນເປັນກັມມະກອນ ກອນເຂົ້າມາຮັບໃຊ້ຢູ່ໃນລັດຖານຕຳຫລວດ. ເມື່ອປີ ໑໙໕໐, ເພິ່ນໄດ້ສ້າງຕັ້ງ <u>ກະຊວງຮັກສາຄວາມປອດໄພຂອງລັດ ແລະ ຕຳຫລວດສາຍແດນຂຶ້ນ</u>. ລັດ ທີ່ຫຸ້ມຫ້ອຍຂອງກັມມະກອນ ແລະ ຊາວນາ ໄດ້ວາງມາດຕະການທີ່ມີປະສິດທິພາບ ເພື່ອປົກປັກຮັກສາປະເທດຊາດ ແລະ ປະຊາຊົນ ຕ້ານຕໍ່ສັດຕູພາຍໃນ ແລະ ຕ່າງປະເທດ . ການສ້າງຕັ້ງກອງຫລອນຂອງຈິນຈຸ້ມກັມມະກອນ ເມື່ອປີ ໑໙໕໘ ຢູ່ໃນວິສາຫະກິດແມ່ນເປັນລັກສະນະທີ່ມີຄວາມສຳຄັນຢ່າງກວ້າງໃຫຍ່ກ່ຽວກັບການປົກປັກຮັກສາ ພາລະກິດແຫ່ງການສ້າງຕັ້ງໂດຍສັນຕິ. ກອງຫລອນດັ່ງກ່າວ ແມ່ນໄດ້ເຕົ້າໂຮມ ພວກກັມມະກອນທີ່ມີສະຕິ .

ເພາະວ່າພວກເຂົາເຈົ້າໄດ້ເຂົ້າໃຈວ່າ ການປະດິດຄິດສ້າງ, ຄວາມສລຽວສລາດ ແລະ ການລິເລີ່ມຈະເປັນປໂຍດໄດ້ນັ້ນກໍ່ຕໍ່ເມື່ອຮັບໃຊ້ປະຊາຊົນເທົ່ານັ້ນ, ຂໍ້ສຳຄັນອີກອັນນຶ່ງກໍ່ຄືຕ້ອງປຸກລຸກຊາວກັມມະກອນ ແລະ ພາລະກອນ ໃຫ້ມີສະຕິຢູ່ສເມີວ່າ ວິສາຫະກິດຂອງ ລັດ ແລະ ພາກົນເຄົ່າການອອກແຮງງານ ຂອງພວກເຂົາເຈົ້ານັ້ນ ແມ່ນເປັນຂອງພວກເຂົາເຈົ້າເອງ . ບົດຮຽນບາງຢ່າງຂອງເສດຖກິດທຶນນິຍົມ ທີ່ຂູດຮີດແຕ່ຜົນກຳໄລນັ້ນໄດ້ມີອິດທິພົນອັນເທິງນານແບບທາງລົບກໍ່ອຸບປະນິໄສຂອງຊາວອອກແຮງງານ. ລັກສະນະອັນນຶ່ງທີ່ຈຳເປັນຂອງການເຮັດວຽກທາງດ້ານການເມືອງ ແລະ ອຸດົມການຂອງບັນດາອົງການຈັດຕັ້ງຂອງພັກ ສອຍ ແລະ ຂອງ ກັມມະບານ ຢູ່ໃນວິສາຫະກິດ <u>ແມ່ນການຂອກເຮັດໃຫ້ເກີດມີທ່າທີ່ໃໝ່ຕໍ່ວຽກງານຢູ່ໃນວິສາຫະກິດຂອງລັດ</u> .

## <u>ການວາງແຜນຢ່າງເປັນເອກກະພາບຂອງ ທຸກແນວງານ</u>

ໃນໄລຍະຫລາຍປີຕໍ່ໄປ, <u>ພື້ນຖານທາງດ້ານວັດຖຸ ແລະ ເຕັກນິກ</u> ຂອງເສດຖກິດ ສັງຄົມນິຍົມ ໄດ້ຂຍາຍຕົວກ້ວາງອອກຢ່າງເປັນລະບົບ . ພາກສ່ວນອຸດສາຫະກັມໃໝ່ໄດ້ເກີດຂື້ນ, ຕົວຢ່າງ ອຸດສາຫະກັມຜລິດຕະພັນພື້ນຖານ , ໂລຫະກັມ, ການສ້າງເຄື່ອງຈັກ ແລະ ຍານພາຫານະ, ເຕັກນິກໄຟຟ້າ ແລະ ເອເລັກຕະໂລນິກ, ອຸດສາຫະກັມເບົາ ຕໍ່ໆໄປ . ເມື່ອປີ ໑໙໕໐ ລັດ ວິສາຫະກິດ ໄດ້ປະສົບຜົນສຳເລັດ ໗໖,໕% ຂອງການຜລິດທາງດ້ານອຸດສາຫະກັມ, ໘໘,໕% ເມື່ອປີ ໑໙໖໐ ແລະ ໙໙,໙% ເມື່ອຕົ້ນປີ ໑໙໗໐ . ໃນເບື້ອງຕົ້ນ ວິສາຫະກິດໃດທາກຍັງບໍ່ທັນໄດ້ນຳເອົາມາເປັນຂອງຊາດນັ້ນ ກໍ່ໄດ້ກັບກາຍມາເປັນວິສາຫະກິດເຄິ່ງລັດເຄິ່ງເອກກະຊົນ ; ເມື່ອຕົ້ນປີ ໑໙໗໐ ບັນດາວິສາຫະກິດທັງໝົດນັ້ນກ່າວນັ້ນກໍ່ໄດ້ຈັດເຂົ້າຢູ່ໃນພາກສ່ວນ ສັງຄົມນິຍົມ ; ໃນຫລາຍກໍລະນີ ເຈົ້າຂອງໂຮງງານເກົ່າໄດ້ຮັກສາໜ້າທີ່ຕຳແໜ່ງນຳພາ . ການຈັດຕັ້ງກັມມະສິດສັງຄົມນິຍົມນັ້ນ, ບັນດາອຸປະກອນການຜລິດ, ຈະແມ່ນກັມມະສິດຂອງ ປະຊາຊົນທັງມວນ ຫລື ກັມມະສິດສະຫະກອນ, ແມ່ນເປັນເງື່ອນໄຂທີ່ຕັດສິນຊີ້ຂາດ ,

- ເພື່ອເຮັດໃຫ້ທຸກພາກສ່ວນເສດຖກິດມີການພັດທະນາ [illegible] ແລະ ການຄຸ້ມຄອງແບບເອກກະພາບ, ໝາຍຄວາມວ່າເຮັດໃຫ້ຂໍ້ສະດວກແຫ່ງເສດຖກິດ ສັງຄົມນິຍົມ ໄດ້ແຜດອອກອອກມາ ນັບມື້ດີຂື້ນ ເພື່ອຮັບໃຊ້ ແລະ ຕອບສນອງຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ;

- ເພື່ອເສີມຂຍາຍ ພລັງແຫ່ງການຜລິດແບບວາງແຜນ, ເພື່ອຍົກລະດັບເທື່ອລະກ້າວຄວາມສາມາດແຫ່ງການຜລິດຂອງງານ, ການຜລິດທາງດ້ານອຸດສາຫະກັມ ແລະ ລາຍໄດ້ແຫ່ງຊາດ ແລະ ເພື່ອພູນໃຊ້ພາກພົ້ນດັ່ງກ່າວຂອງເສດຖກິດໃຫ້ເປັນຄວາມກ້າວໜ້າທາງດ້ານສັງຄົມຂອງ ຊາວອອກແຮງງານ ;

- ເພື່ອສ້າງພື້ນຖານອັນແໜ້ນແໜ້ນທາງດ້ານເສດຖກິດໃຫ້ແກ່ບັນດາສິດທິປະຊາທິປະໄຕຂອງຊາວອອກແຮງງານ ແລະ ໃຫ້ແກ່ລັດ ສັງຄົມນິຍົມ .

ດ້ວຍແນວທາງເສດຖະກິດຂອງຕົນເອງ, ມາຮອດປັດຈຸບັນ ສປຈ, ແມ່ນໄດ້ຕິດຢູ່ໃນຈຳພວກ ໑໐ ປະເທດ ທີ່ເປັນມະຫາອຳນາດ ທາງດ້ານອຸດສາຫະກຳຂອງໂລກ . ເປັນຖານຄ້ຳທີ່ເຂັ້ມແຂງຢູ່ໃນໂລກທັງມວນ .

### ໕/- ການສ້າງພັນທະພາບກັບຊົນຊັ້ນຊາວນາທຸກຍາກ.

ພວກນາຍທຶນຜູກຂາດ, ເຈົ້າຂອງທີ່ດິນໃຫຍ່ ແລະ ສັກດີນາທີ່ດິນ ພວກເຂົາໄດ້ຮັບການອຸ້ມຊູຈາກ ພວກຈັກກະພັດນິຍົມ ແລະ ພວກ ຟາດຊິດ ເຢຍລະມັນ. ເມື່ອເປັນຄືແນວນັ້ນ ນັບແຕ່ປີ ໑໙໔໕, ພັກກອມມູນິດ ໂດຍໄດ້ຮັບຄວາມອຸ້ມຊູຈາກ ພັກ ສັງຄົມປະຊາທິປະໄຕ ເຢຍລະມັນ ແລະ ກຳລັງອື່ນໆ ຕ້ານຕໍ່ ຟາດຊິດ ໄດ້ຮຽກຮ້ອງໃຫ້ມີການປະຕິຮູບທີ່ດິນແບບປະຊາທິປະໄຕ . ແມ່ນຍ້ອນພາຍຫຼັງການຕົກລົງກັນຢ່າງກວ້າງຂວາງພາຍໃນກຸ່ມຂອງບັນດາ ພັກ ຕ້ານຕໍ່ ຟາດຊິດ ເພື່ອປະຊາທິປະໄຕ ເທົ່ານັ້ນ ພັກ ກຣິສຕະສາສນາ-ປະຊາທິປັດ ແລະ ພັກ ເສລີປະຊາທິປະໄຕ ຈຶ່ງໄດ້ເຫັນພ້ອມນຳກັນຍາການປະຕິຮູບທີ່ດິນ ຈຶ່ງໄດ້ວາງມາດຕະການໄວ້ດັ່ງນີ້ :

- ການຖອດຖອນສິດ ໃນດ້ານຊັບສິນຂອງພວກອາຊະຍາກອນສົງຄາມ ແລະ ພວກຜູ້ນຳ ນາຊີ, ເຈົ້າຂອງທີ່ດິນ ທີ່ມີຫຼາຍກວ່າ ໑໐໐ ເຮັກຕາ, ລວມທັງບັນດາເຄື່ອງຂອງທີ່ຍັງເຫຼືອ ແລະ ສູນຫາຍໄປ ( ຍົກເວັ້ນແຕ່ທີ່ລະນີສົງ) ;

- ການຈ່າຍແຈກທີ່ດິນລະຫວ່າງ ກຳມະກອນ ການກະເສດ, ຊາວນາທີ່ທຸກຈົນ ແລະ ຊາວອົບພະຍົບ, ການຂຸດຄົ້ນໃໝ່ ໃນນີ້ໄດ້ລະຫວ່າງ ໕ ແລະ ໑໐ ເຮັກຕາ ;

- ການໂອນເອົາບັນດາເຄື່ອງຂອງທີ່ຍັງເຫຼືອ ແລະ ສູນຫາຍໄປ ແລະ ການນຳໃຊ້ຕາມຄວາມສາມາດລວມກັນເພື່ອການຊ່ວຍເຫຼືອຊາວນາ ໂດຍຄະນະກຳມະການທີ່ໄດ້ຖືກຮັບເລືອກຕັ້ງ.

24/VII
ຫ້າມຈຳໜ່າຍ

ດິນຂອງເຈົ້າຂອງທີ່ດິນໃຫຍ່ໄດ້ມອບໃຫ້ແກ່ ຊາວນາ .

ເພື່ອເຮັດໃຫ້ການປະຕິຮູບທີ່ດິນປະສົບຜົນສຳເລັດ, ເພິ່ນໄດ້ເລືອກຕັ້ງກຳມະການປະຈຳໝູ່ບ້ານຂຶ້ນ, ໂດຍມີຈຳນວນທັງໝົດ ໕໔.໐໐໐ ຄົນ ໃນນັ້ນ ໔໐.໐໐໐ ຄົນ ແມ່ນກຳມະກອນການກະເສດ, ໑໔.໐໐໐ ຄົນ ແມ່ນພວກເຊົ່ານາ ແລະ ໖.໐໐໐ ຄົນ ແມ່ນຊາວອົບພະຍົບ . ໃນຈຳນວນນີ້, ຕາມທາງອຽງການເມືອງແລ້ວ ໑໘.໔໓໔ ຄົນ ແມ່ນ ພວກກອມມູນິດ , ໓.໑໖໔ ຄົນ ແມ່ນພວກ ສັງຄົມ-ປະຊາທິປັດ, ໓໓໔ ຄົນ ແມ່ນ ເປັນສະມາຊິກຂອງ ໔ ພັກ ສັກດີນາ ແລະ ໓໒.໐໖໘ ແມ່ນ ພວກທີ່ບໍ່ສັງກັດຢູ່ໃນພັກ .

- ຍ້ອນການປະຕິຮູບທີ່ດິນ , ຊາວນາທີ່ທຸກຈົນ ແລະ ກຳມະກອນການກະເສດ ເກືອບ ໑໔໐.໐໐໐ ຄົນ ສາມາດປະກອບການຂຸດຄົ້ນຂຶ້ນ; ດິນຈຳນວນນີ້ໄດ້ມອບໃຫ້ແກ່ຊາວນາ

ທີ່ທຸກຈົນ ໗໔.໐໐໐ ຄົນ ແລະ ມອບໃຫ້ແກ່ຊາວອົບພະຍົບ ໗໑.໐໐໐ ຄົນ ແລະ ຫລາຍແສນຄອບຄົວກໍ່ໄດ້ມີທີ່ດິນເຮັດສວນຄົວເປັນຂອງຕົນເອງ .

- ເກືອບຮອດ ໑/໓ ຂອງທີ່ດິນທີ່ໄດ້ຖືກຍຶດມາໄດ້ມອບໃຫ້ແກ່ ອົງການຈັດຕັ້ງແຫ່ງຊາດ ແລະ ເທສບານ , ທີ່ດິນດັ່ງກ່າວໄດ້ໃຊ້ເປັນນິຄົມຂອງ ລັດ ໕໐໐ ແຫ່ງ , ຊຶ່ງເປັນພື້ນເພງໃຫ້ແກ່ພາກສ່ວນສັງຄົມນິຍົມແຫ່ງການກະເສດ .

ຜົນທີ່ສຳຄັນຂອງການປະຕິຮູບທີ່ດິນ ແມ່ນການລົບລ້າງຊົນຊັ້ນເຈົ້າຂອງທີ່ດິນໃຫຍ່ , ຊຶ່ງເປັນທີ່ອາໄສຂອງການປະຕິກິຣິຍາ ຢູ່ໃນຊົນນະບົດ . ພ້ອມດຽວກັນນັ້ນ, ການປະຕິຮູບທີ່ດິນໄດ້ເຮັດໃຫ້ພັນທະພາບຂອງ ຊົນຊັ້ນ ກັມມະກອນ ແລະ ຊາວນາທີ່ດຸພົນ ມີພື້ນຖານ ສັງຄົມ-ເສດຖະກິດຢ່າງໝັ້ນຄົງ .

ໃນໄລຍະຫລາຍປີທີ່ຕໍ່ເນື່ອງກັນມານັ້ນ ພັນທະພາບດັ່ງກ່າວ ໄດ້ປາກົດເປັນຈິງຂຶ້ນມາ ໂດຍການຊ່ວຍເຫລືອທາງດ້ານວັດຖຸຕລອດມາຂອງຊົນຊັ້ນກັມມະກອນ ເພື່ອປັບປຸງການຂຸດຄົ້ນໃໝ່ໃຫ້ແໜ້ນແກ່ນ. ການສ້າງຕັ້ງສະຖານີໃຫ້ເຊົ່າເຄື່ອງຈັກ ແມ່ນປາກົດເປັນສິ່ງສຳຄັນກ່ຽວກັບບັນຫານີ້; ສະຖານີຕ່າງໆ ໄດ້ອະນຸຍາດໃຫ້ແກ່ຊາວນາຢືມລົດໄຖນາ ແລະ ເຄື່ອງຈັກອື່ນໆ ຕາມຄວາມສາມາດ ຂອງ ອຸດສາຫະກັມ, ນັ້ນນັ້ນແມ່ນການລິເລີ້ມທີ່ຈຳເປັນ ເພື່ອໄຂຊ່ອງທາງແຫ່ງການຜລິດຂອງສະຫະກອນ, ໝາຍຄວາມວ່າການຜລິດແບບ ສັງຄົມນິຍົມ .

ການສ້າງຕັ້ງ ສະຫະກອນການຜລິດ ເທື່ອທຳອິດ.

ເມື່ອຕົ້ນປີ ໑໙໕໐, ໃນຂະນະທີ່ ພື້ນຖານອັນສຳຄັນຂອງສັງຄົມນິຍົມ ໄດ້ຖືກສ້າງຕັ້ງຂຶ້ນຢູ່ໃນອຸດສາຫະກັມ ໂດຍການຂຍາຍຕົວຢ່າງວ່ອງໄວຂອງພາກສ່ວນລັດ , ການຜລິດຄ້າຂາຍນ້ອຍກໍ່ຍັງຄອບງຳຢູ່ໃນການກະສິກັມຢູ່ . ເພື່ອຮັບປະກັນໃຫ້ແກ່ການຂຍາຍຕົວຂອງເສດຖະກິດທັງໝົດ , ກໍ່ຕ້ອງຊອກຫາການແກ້ໄຂທີ່ຈະໃຫ້ເກີດຄວາມກ້າວໜ້າຢູ່ໃນບັນຫາຂັດແຍ້ງກັນລະຫວ່າງອຸດສາຫະກັມ ຊຶ່ງໄດ້ຂຍາຍຕົວໄປຢ່າງວ່ອງໄວ ແລະ ການກະສິກັມທີ່ລ້າຫລັງທາງດ້ານສັງຄົມ ແລະ ເສດຖະກິດ . ຢູ່ໃນຫລາຍໆໝູ່ບ້ານ, ຊາວນາທີ່ດຸພົນ ແລະ ກັມມະກອນການກະເສດຈຳນວນນຶ່ງ, ໂດຍສະເພາະກໍ່ແມ່ນສະມາຊິກຂອງ ພັກ ສອຟ, ໄດ້ລວມຕົວກັນເຂົ້າ ເພື່ອສ້າງຕັ້ງສະຫະກອນການຜລິດການກະເສດ. ສ່ວນຊາວນານັ້ນ, ສ່ວນຫລາຍແມ່ນຍັງສອງຈິດສອງໃຈຢູ່ ແລະ ບາງຄັ້ງກໍ່ຂາດຄວາມໄວ້ເນື້ອເຊື່ອໃຈກໍ່ການວິວັດດັ່ງກ່າວ . ພວກປະຕິການ ໄດ້ລົງມືປະຕິບັດທຳລາຍນານາເພ ເຊັ່ນວ່າການຈູດໄຟເຜົາ, ການເບື່ອເບົາສັດລ້ຽງ ແລະ ການທຳລາຍວັດຖຸສິ່ງຂອງ . ບອກໄສ່ການກະທຳດັ່ງກ່າວນັ້ນວິທຍຸກະຈາຍສຽງຂອງ ສສຟ ແລະ ແຫລງແລງຕະເວັນຕົກກໍ່ໄດ້ອອກແຮງໂຄສະນາ ໂດຍມຸ້ງຫວັງຢາກໃຫ້ມີການເຊື່ອຖືວ່າການຂຸດຄົ້ນທີ່ດິນ ແລະ ການລ້ຽງສັດ ແບບລວມໝູ່ ເຮັດໃຫ້ປະສິດທິພາບແຫ່ງການຜລິດລົດນ້ອຍຖອຍລົງ ແລະ ສຸດທ້າຍກໍ່ໄປຮອດບ່ອນອຶດຢາກຢ່າງຫລີກບໍ່ພົ້ນ. ແຕ່ວ່າພັນທະພາບຂອງ ຊົນຊັ້ນກັມມະກອນ ແລະ ຊາວນາທີ່ດຸພົນ, ການຊ່ວຍເຫລືອຂອງຊົນຊັ້ນກັມມະກອນໃຫ້ແກ່ພວກ

[illegible]

๖๖........

[illegible]

๖๖........

[illegible]

ບຸກເບີກຂອງຂະບວນການ ເພື່ອການກະເສດ ແມ່ນຢູ່ໃນລະດັບແຂງແຮງທີ່ສຸດ, ເມື່ອທ້າຍປີ ໑໙໕໙, ສະຫະກອນການກະເສດກໍ່ໄດ້ເກີດມີຂຶ້ນເຖິງ ໔.໗໐໐ ແຫ່ງ , ຊຶ່ງກິນເນື້ອທີ່ການເພາະປູກທັງໝົດ ຂອງປະເທດ ໑໑,໖%

- ໂດຍການລິເລີ່ມຂອງ ພັກ ສອຢ, ກັມມະກອນຢູ່ໃນອຸດສາຫະກັມສ່ວນຫລວງຫລາຍ ກໍ່ໄດ້ອອກໄປລ້ອມຢູ່ໃນສະຫະກອນການກະເສດ . ພວກເຂົາເຈົ້າໄດ້ມີບົດບາດສຳຄັນ ກ່ຽວກັບການປັບປຸງ ການຈັດຕັ້ງວຽກງານໃຫ້ດີຂຶ້ນ ແລະ ການເສີມຂະຫຍາຍປະຊາທິປະໄຕຢູ່ພາຍໃນ . ວິສາຫະກິດອຸດສາຫະກັມຂອງລັດບາງບ່ອນ ໄດ້ຮັບເປັນຜູ້ອຸປະຖັມ ສະຫະກອນການຜລິດການກະເສດ .

ແມ່ນປີ ໑໙໖໐ ຊຶ່ງເປັນປີທີ່ໄດ້ເລີ່ມຕົ້ນບາດກ້າວທີ່ຕັດສິນຊີ້ຂາດແຫ່ງການຕໍ່ສູ້ ເພື່ອໄຊຊນະແຫ່ງການພົວພັນຂອງການຜລິດ ສັງຄົມນິຍົມ ຢູ່ໃນຊົນນະບົດ . ໂດຍການລິເລີ່ມຂອງພັກ ສອຢ ແລະ ແນວຮ່ວມແຫ່ງຊາດ, ບ່ອນງານຈຳນວນນຶ່ງໄດ້ຖືກສ້າງຕັ້ງຂຶ້ນ, ບ່ອນງານດັ່ງກ່າວນັ້ນແມ່ນຊາວກັມມະກອນຂອງໂຮງງານເປັນເຈົ້າການ, ພວກເຂົາເຈົ້າໄດ້ອອກໄປສູ່ໃນໝູ່ບ້ານຕ່າງໆ ເພື່ອອະທິບາຍເຖິງລູ່ທາງແຫ່ງອະນາຄົດກັບຊາວນາທຸກຄົນ . ການຖົກຖຽງກັນຢ່າງຍືດຍາວໄດ້ເກີດມີຂຶ້ນຢູ່ເລື້ອຍໆ ໃນໄລຍະດັ່ງກ່າວນັ້ນ ບົດຮຽນທີ່ໄດ້ພົບດີຈາກ ສະຫະກອນ ທີ່ສ້າງຂຶ້ນມາແລ້ວນັ້ນ, ໄດ້ມີບົດບາດຢ່າງສຳຄັນ, ເມື່ອຕົ້ນປີ ໑໙໖໐ ສະຫະກອນການກະເສດ ກໍ່ໄດ້ຖືກສ້າງຕັ້ງຂຶ້ນຢູ່ໃນທຸກໝູ່ບ້ານຂອງ ສອຢ. ຊີວິດໄດ້ຢັ້ງຢືນໃຫ້ເຫັນເຖິງຄວາມຖືກຕ້ອງເປັນທັມຂອງ ນະໂຍບາຍແຫ່ງການປະຕິຮູບທີ່ດິນຂອງ ພັກ ສອຢ . ພວກເຮົາຈະຍົກເອົາບາງຕົວຢ່າງດັ່ງຕໍ່ໄປນີ້ຂຶ້ນມາເວົ້າ :

- ເມື່ອປີ ໑໙໖໕, ຊາວກະສິກອນຜູ້ນຶ່ງ ສາມາດລ້ຽງຄົນໄດ້ຕໍ່າ ໑໗ ຄົນ, ເມື່ອມາຮອດປີ ໑໙໗໖ ອັດຕາສ່ວນແມ່ນ ໓໔ ຄົນ .

- ລະຫວ່າງ ປີ ໑໙໖໖ ແລະ ໑໙໗໐, ປະສິດທິພາບແຫ່ງການຜລິດໂດຍຄິດເປັນສ່ວນສະເລັ່ຍ [illegible] ແລ້ວແມ່ນ ໔໙,໘ ເປົາຕານ ສຳລັບພືດພັນທັນຍາຫານ , ຕໍ່ມາ ໑໙໗໑ ແລະ ໑໙໗໕ ໄດ້ເພີ່ມຂຶ້ນ ໓໖,໔ . ຍ້ອນການນຳໃຊ້ວັດຖຸເຄມີ, ການຂຸດຄົ້ນແບບກະເສດສຸມ ຂນາດໃຫຍ່, ນັບຕັ້ງແຕ່ປີ ໑໙໗໖ ຫາ ໑໙໘໐ ກະວ່າປະສິດທິພາບແຫ່ງການຜລິດຈະເພີ່ມຂຶ້ນ ໔໐ ຫາ ໔໑ ເປົາຕານ ຕໍ່ ເຮັກຕາ .

- ເມື່ອປີ ໑໙໖໐, ໔໖,໑% ຂອງ ຫົວຜັກກາດຫວານ, ໔໔,໓% ຂອງມັນຝຣັ່ງ ແລະ ໓໗,໙% ຂອງພືດພັນທັນຍາຫານ ແມ່ນໄດ້ທຳການເກັບກ່ຽວດ້ວຍເຄື່ອງຈັກ, ເມື່ອປີ ໑໙໗໗, ພືດພັນທັນຍາຫານທັງໝົດ ແລະ ຫົວຜັກກາດຫວານ ແມ່ນໄດ້ຖືກເກັບກ່ຽວດ້ວຍເຄື່ອງຈັກ, ອັດຕາສ່ວນແມ່ນ ໙໖,໖% ສຳລັບມັນຝຣັ່ງ .

- ປະສິດທິພາບແຫ່ງການຜລິດນ້ຳນົມຂອງງົວຕົວນຶ່ງ ຕໍ່ປີ ເມື່ອປີ ໑໙໖໐ ແມ່ນ ໔.໖໔໗ ກິໂລ, ເມື່ອມາຮອດປີ ໑໙໗໗ ຜລິດໄດ້ ໖.໗໙໙ ກິໂລ.

- ຕັ້ງແຕ່ຕົ້ນປີ ໑໙໗໐, ການກະສິກັມແມ່ນໄດ້ຕອບສນອງຢ່າງພຽງພໍກັບຄວາມຕ້ອງການໃນດ້ານຊີ້ນ, ຊີ້ນໝູ, ກະປ໋ອງຊີ້ນ ແລະ ເນື້ອເຄັມ, ນ້ຳນົມ, ໄຂ່ ແລະ ເຄື່ອງອາຫານອື່ນໆ . ສປຢ ໄດ້ສົ່ງຜລິດຕະພັນທາງດ້ານການກະເສດຫລາຍທີ່ຫລາຍຢ່າງອອກໄປຂາຍຕ່າງປະເທດ .

## ໖/- <u>ການຟື້ນຟູແນວຄິດຈິດໃຈໃໝ່ຂອງປະຊາຊົນ</u>

ປັດຈຸບັນນີ້ຢູ່ທີ່ ສປຢ, ໄດ້ມີຫລາຍຮຸ່ນຄົນທີ່ຍັງບໍ່ໄດ້ຊົມລົດຊາດອະດີດຂອງທຶນນິຍົມໂດຍກົງ , ບໍ່ໄດ້ຮູ້ຈັກການຕໍ່ສູ້ຢ່າງຂົມຂື່ນ ເພື່ອຜ່ານຜ່າມໍລະດົກທຶນນິຍົມ . ພວກເຂົາເຈົ້າໄດ້ພາກັນເຕີບໃຫຍ່ຂື້ນມາໃຕ້ລະບົບສັງຄົມນິຍົມ, ຊຶ່ງອຳນວຍທຸກຄວາມສາມາດໃຫ້ແຕ່ລະຄົນ ເພື່ອຝຶກຝົນຫລໍ່ຫລອມຕົນເອງ . ໃນພາກສ່ວນນີ້ກໍ່ເຊັ່ນດຽວກັນ, ບັນດາເງື່ອນໄຂທີ່ຂາດໄດ້ຖືກສ້າງຕັ້ງຂື້ນມາ, ໃນໄລຍະປີທຳອິດແຫ່ງການກໍ່ສ້າງຕ້ານຕໍ່ ຟາດຊິດ ແລະ ເພື່ອປະຊາທິປະໄຕ, ໃຕ້ການຊີ້ນຳຂອງພັກແຫ່ງຊົນຊັ້ນກັມມະກອນ .

## <u>ການນຳເນີດຂອງການ ສຶກສາ ແຫ່ງຊາດແບບໃໝ່</u>

ການປ່ຽນແປງຢ່າງເລິກເຊິ່ງໄດ້ເກີດມີຂື້ນຢູ່ໃນພາກສ່ວນແຫ່ງການສຶກສາຂັ້ນປະຖົມ, ມັທຍົມ ແລະ ມະຫາວິທຍາໄລ. ປື້ມຮຽນຕ່າງໆ ແມ່ນໄດ້ຖືກລ້າງສ່ວຍອອກຈາກອຸດົມການ ຟາດຊິດ . ຊາຍ ແລະ ຍິງ ຈຳນວນຫລາຍພັນຄົນ, ທີ່ຕິດພັນກັບປະຊາຊົນ ໄດ້ຮັບການອົບຮົມເປັນຄູສອນ ; ໃນນາມຂອງຊົນຊັ້ນກັມມະກອນ, ພວກເຂົາເຈົ້າໄດ້ເຜີຍແຜ່ ລັດທິມະນຸດສະທັມໃຫ້ແກ່ ອະນຸຊົນ, ພາລະກິດແຫ່ງຄວາມກ້າວໜ້າ ແລະ ສັງຄົມນິຍົມ . ເມື່ອປີ ໑໙໔໕, ມາດຕະການເບື້ອງຕົ້ນຂອງນະໂຍບາຍຕໍ່ໂຮງຮຽນນັ້ນກໍ່ຄືການລົບລ້າງອະພິສິດ ສັກດີນາ ໃນດ້ານການສຶກສາ ຊຶ່ງມາດຕະການສ່ວນໃຫຍ່ແມ່ນຂັດຂວາງບໍ່ໃຫ້ລູກຫລານຂອງ ຊາວກັມມະກອນ, ຊົນຊົນ ແລະ ຊົນຄົນອອກແຮງງານອື່ນໆ ບໍ່ໃຫ້ໄດ້ຮັບການສຶກສາ . ໃນເວລາດຽວກັນນັ້ນ, ເພິ່ນກໍ່ໄດ້ເລີ້ມຕົ້ນຂຍາຍພື້ນຖານທາງດ້ານວັດຖຸຂອງການສຶກສາໃຫ້ກວ້າງອອກ . ມາຮອດປັດຈຸບັນ, ສປຢ ແມ່ນສາມາດໃຫ້ການສຶກສາຂັ້ນສາມັນ ແລະ ການສຶກສາສັບພະຊ່າງ ອັນມີກຳນົດ ໘ ປີ ໃຫ້ແກ່ເດັກນ້ອຍທົດທຸກຄົນ; ໙໔% ຂອງ ຊາວໜຸ່ມໄດ້ສືບຕໍ່ຮຽນຫ້ອງ ໙ ຫ້ອງ ໑໐ . ເພິ່ນໄດ້ໃຫ້ການສຶກສາຂັ້ນສາມັນແກ່ຊາວໜຸ່ມ ໃນດ້ານວິທຍາສາດໃໝ່ໆ ແລະ ວິຊາສັງຄົມສາດ , ນອກນັ້ນເພິ່ນຍັງໄດ້ປູກສຸກພວກຊາວໜຸ່ມດັ່ງກ່າວນັ້ນ ໃຫ້ຮູ້ຈັກຮັກ ແລະ ນັບຖືການອອກແຮງງານ, ຕິດແທດເຂົ້າກັບປິຕຸພູມສັງຄົມນິຍົມ ແລະ ສາກົນກັມມະຊົນຢ່າງເລິກເຊິ່ງແບບເຖິງກົກເຖິງຮາກ. ເມື່ອປີ ໑໙໔໕ ບັນດາ ມະຫາວິທະຍາໄລ ແລະ ສະຖາບັນສຶກສາຂັ້ນສູງ ກໍ່ໄດ້ໄຂປະຕູໃຫ້ແກ່ບຸດຫລານຂອງ ພວກກັມມະກອນ ແລະ ຊາວນາ . ຢູ່ໃນມະຫາວິທຍາໄລກັມມະກອນ ແລະ ຊາວນາ

ຊຶ່ງໄດ້ສ້າງຂຶ້ນສະເພາະ ເພື່ອລຸດພາຍດັ່ງກ່າວ ຊາວໜຸ່ມທີ່ມາຈາກຄອບຄົວກັມມະກອນ ແລະ ຊາວນາ ສາມາດຕຽມສອບເສັງເອົາ ປະກາສນີຍະບັດ ອຸດົມສຶກສາ ແລະ ຕຽມຕົວຫາທາງເຂົ້າໃນສະຖາບັນສຶກສາ ຊັ້ນສູງ .

- ເມື່ອປີ ໑໙໔໖, ໔% ຂອງ ບຸດຫລານຂອງ ພວກກັມມະກອນ ແລະ ຊາວນາ ໄດ້ເຂົ້າສຶກສາຢູ່ໃນ ມະຫາວິທະຍາໄລ, ເມື່ອມາຮອດປີ ໑໙໕໐ ອັດຕາສ່ວນ ແມ່ນ ມີເຖິງ ໑໗% . ນັບຕັ້ງແຕ່ຕົ້ນປີ ໑໙໗໐ ເປັນຕົ້ນມາ ອັດຕາສ່ວນດັ່ງກ່າວແມ່ນໄດ້ ເພີ່ມຂຶ້ນເປັນ ໕໕-໖໐% .

## ການອົບຮົມ ບົ່ມເພາະ ຊາວປັນຍາຊົນໃໝ່

ລະຫວ່າງປີ ໑໙໗໑ ແລະ ປີ ໑໙໗໗, ພວກທີ່ໄດ້ໃບປະກາສນີຍະບັດ ໕໐໐,໐໐໐ ແມ່ນໄດ້ ອອກຈາກ ສະຖາບັນສຶກສາຊັ້ນສູງ ໕໔ ແຫ່ງ ຂອງປະເທດ (ເມື່ອປີ ໑໙໔໗ ສະຖາບັນຊັ້ນສູງມີພຽງ ໗ ແຫ່ງ); ພວກເຂົາເຈົ້າໄດ້ມີໜ້າທີ່ຕຳແໜ່ງຮັບຜິດຊອບຢູ່ໃນ ລັດ ແລະ ເສດຖະກິດ, ການກະສິກັມ, ການສຶກສາ ແລະ ຢູ່ໃນ ຫລາຍຂແໜງງານຂອງສັງຄົມ ໃນນັ້ນພວກເຂົາເຈົ້າໄດ້ສຳເລັດພາລະກິດຢ່າງສງ່າງາມ ເພື່ອຮັບໃຊ້ການສ້າງ ຕັ້ງ ສັງຄົມນິຍົມ . ການອົບຮົມບົ່ມເພາະພວກປັນຍາຊົນໃໝ່, ຊຶ່ງສ່ວນຫລາຍແມ່ນມາຈາກຊົນຊັ້ນກັມມະກອນ ຫລື ແຫຼ່ງກຳເນີດມາຈາກ ວົງການກັມມະກອນ ແລະ ຊາວນາ , ນັ້ນພາຍເຖິງການຂຍາຍຕົວຢ່າງເປັນລະບົບ ຂອງການສຶກສາສາຍສາມັນ ແລະ ຊັ້ນສູງ . ຍ້ອນການຊ່ວຍເຫລືອຈາກບັນດາສະຫາຍອາວຸໂສຂອງພວກເຂົາ ເຈົ້າ ແລະ ການນຳເອົາພວກເຂົາເຈົ້າເຂົ້າມາຢູ່ໃນ ວົງໂຄຈອນແຫ່ງການສຳເລັດພາລະກິດທາງດ້ານສັງຄົມ , ມັນມີຊ່ອງທາງເປັນໄປໄດ້ທີ່ຈະກໍ່ສ້າງປັນຍາຊົນໃໝ່ນາອອກແຮງຢ່າງຕັ້ງໜ້າ ເພື່ອຜົນປໂຍດຂອງຊົນຊັ້ນ ກັມມະ ກອນ . ຫລັກການດັ່ງກ່າວແມ່ນມີຜົນສັກສິດສຳຫລັບນັກຄົ້ນຄ້ວາ ແລະ ນັກເທັກນິກ ກໍ່ຄືສຳລັບ ນັກສິລະປິນ.

## ກ/.. ທິດທາງ ແລະ ເປົ້າໝາຍຂອງ ສັງຄົມນິຍົມ

ເອຣິກຮອນເນັກເກີ ໄດ້ປະກາດຢູ່ໃນກອງປະຊຸມໃຫຍ່ ຄັ້ງທີ່ ໙ ຂອງ ພັກ ສອຍ ເມື່ອ ເດືອນ ພຶສພາ ໑໙໗໑ ວ່າ :

" ພວກເຮົາເຂົ້າໃຈແຕ່ເປົ້າໝາຍອັນດຽວເທົ່ານັ້ນ ທີ່ກຳນົດຈຸດຢູ່ ການເມືອງຂອງພັກເຮົາ ແຜນປະຕິບັດສ້າງຄືກັນກັບສິ່ງທຸກຢ່າງທີ່ໄດ້ສ້າງຂຶ້ນມາ ແມ່ນເພື່ອຄວາມສົມບູນພູນສຸກຂອງ ມະນຸດ, ເພື່ອຄວາມເພີ່ມພູນມວນຊົນຂອງປະຊາຊົນ ເພື່ອຜົນປໂຍດຂອງຊົນຊັ້ນກັມມະ ກອນ ແລະ ຂອງ ຊາວອອກແຮງງານ ອື່ນໆ ນີ້ນັ້ນແມ່ນທິດທາງຂອງ ສັງຄົມນິຍົມ, ເມື່ອເປັນຄືແນວນັ້ນ ພວກເຮົາຈຶ່ງພາກັນເຮັດວຽກ ແລະ ຕໍ່ສູ້ ".

ຢູ່ໃນກອງປະຊຸມໃຫຍ່ຂອງພັກ ສອຍ ຄັ້ງທີ ໒ ແລະ ໓ , ການເນື່ອງດ້ວຍການຊີ້ທິດທາງໄປຍັງຄວາມສົມບູນພູນສຸກຂອງ ປະຊາຊົນນັ້ນມັນໄດ້ຮັບການພິສູດຈາກວິທະຍາສາດ, ການເນື່ອງດ້ວຍກາວໄດ້ປະສົບຜົນສໍາເລັດຢ່າງເປັນລະບົບຢູ່ໃນຊີວິດ ສັງຄົມ ຂອງ ສປຢ . ພັກລະພັກຂອງ ພັກ ສອຍ ແມ່ນຍົກລະດັບຊີວິດທາງດ້ານວັດຖຸ ແລະ ລະດັບວັທນະທັມຂອງປະຊາຊົນ ໂດຍການເສີມຂຍາຍການຜະລິດແບບ ສັງຄົມນິຍົມຢ່າງວອງໄວ, ການເພີ້ມທະວີຄວາມສາມາດ, ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກນິກ ແລະ ຄວາມເຕີບໃຫຍ່ຂຍາຍຕົວຂອງຄວາມສາມາດແຫ່ງການຜະລິດຂອງງານ . ພັກສອຍ ໄດ້ສືບຕໍ່ເສັ້ນທາງຊີ້ງໃນນັ້ນ ນະໂຍບາຍທາງດ້ານເສດຖະກິດ ແລະ ສັງຄົມ ໄດ້ເອົາມາລວມຫົວເຂົ້າກັນຢ່າງເປັນເອກກະພາບ . ລະບອບສັງຄົມນິຍົມ ປະສົບຜົນສໍາເລັດໃນສິ່ງທີ່ລະບົບທຶນນິຍົມບໍ່ສາມາດເຮັດໄດ້ ດ້ວຍເຫດທີ່ວ່າກະວິການຂອງທຸກການເຄື່ອນໄຫວທາງດ້ານເສດຖະກິດ ແມ່ນເພື່ອ ... ຕົວຢ່າງ ເຊັ່ນ , ຄວາມເຕີບໃຫຍ່ທາງດ້ານເສດຖະກິດ, ການພັດທະນາວິທະຍາສາດ ແລະ ເຕັກນິກ, ສອນລະບອບສັງຄົມນິຍົມນັ້ນ ທຸກການປະສົບຜົນສໍາເລັດດັ່ງກ່າວແມ່ນນໍາໄປຫາຄວາມກ້າວໜ້າທາງດ້ານສັງຄົມ ແລະ ວັທນະທັມໂດຍກົງ , ດັ່ງຊາວອອກແຮງງານທຸກຄົນສາມາດພິສູດເຫັນມາແລ້ວ. ເພາະຄວາມກ້າວໜ້າທາງດ້ານເສດຖະກິດແມ່ນມີຜົນສະທ້ອນຕໍ່ຊີວິດຂອງພົລເມືອງ.

ການເຕີບໃຫຍ່ທາງດ້ານເສດຖະກິດຢ່າງສເມີ່ເສມີພາຍ

- ເມື່ອປີ ໑໙໗໖, ການຜະລິດທາງດ້ານອຸດສາຫະກັມຂອງ ສປຢ ໄດ້ເພີ້ມຂຶ້ນເປັນ ໔ ເທົ່າຕົວ ເມື່ອທຽບໃສ່ການຜະລິດຂອງປະເທດ ເປັນລວມ ຕາມ ໑໙໖໙, ສ່ວນຈໍານວນພົລເມືອງ ຊໍາພັດມີພຽງແຕ່ ໑/໔ ຂອງພົລເມືອງໂລກເທົ່ານັ້ນ.

- ລະຫວ່າງປີ ໑໙໗໐ ແລະ ໑໙໗໗, ການຜະລິດທາງດ້ານອຸດສາຫະກັມ ເພື່ອການຄ້າ ຢູ່ໃນ ສປຢ ໄດ້ເພີ້ມຂື້ນເປັນ ໕໔,໑% ໂດຍສະເພາະແມ່ນ ເນື່ອງມາຈາກຄວາມກ້າວໜ້າທາງດ້ານຄວາມສາມາດຂອງງານ .

- ເມື່ອປີ ໑໙໗໐, ລາຍໄດ້ແຫ່ງຊາດມີພຽງ ໑໐໙,໕ ກີ ໂດຍຄິດເປັນເງິນ ມາກ ມາຮອດ ປີ ໑໙໗໗ ລາຍໄດ້ມີເກືອບເຖິງ ໑໕໐ ກີ ໂດຍຄິດເປັນສ່ວນສະເລັ່ຍແລ້ວ ໒໓% ຂອງລາຍໄດ້ແຫ່ງຊາດແມ່ນໄດ້ຖືກນໍາໄປເປັນທຶນສະສົມ ແລະ ໗໗% ແມ່ນເພື່ອການບໍລິໂພກປະຈໍາບຸກຄົນ ແລະ ເພື່ອ ສັງຄົມ

ສປຢ ມີຄວາມເຕີບໃຫຍ່ຂຍາຍຕົວທາງດ້ານເສດຖະກິດຢ່າງຕໍ່ເນື່ອງ ແລະ ສມໍ່າສເມີ, ໃນປີ ໑໙໗໐, ເຖິງວ່າ ເພງການເຕີບໃຫຍ່ຂຍາຍຕົວທາງດ້ານເສດຖະກິດຢູ່ໃນ ສປຢ ຖ້າທຽບໃສ່ບັນດາປະເທດ ຈັກກະພັດນິຍົມແລ້ວ ແມ່ນບໍ່ມີປະເທດໃດທຽມທັນໄດ້ . ຍ້ອນຜົນດັ່ງກ່າວ, ມັນໄດ້ອໍານວຍຄວາມສະດວກໃຫ້ແກ່ ສປຢ ເພື່ອວາງແຜນໂຄງການດໍາເນີນງານຂນາດໃຫຍ່ .

<u>ນະໂຍບາຍທາງດ້ານ ສັງຄົມ</u>

ຈຸດມຸ້ງໝາຍກໍແມ່ນເພື່ອຍົກລະດັບຊີວິດທາງດ້ານວັດຖຸ ແລະ ວັທນະທັມຂອງທົ່ວປວງຊົນ ເຊັ່ນ :

- ລະຫວ່າງປີ ໑໙໗໖ ແລະ ໑໙໗໗ ເພື່ອໄດ້ສ້າງທີ່ຢູ່ອາໄສສໍາເລັດ ໗໘໘.໐໐໐ ບ່ອນ (ກໍ່ສ້າງ, ປົວແປງ ແລະ ເຮັດໃຫ້ທັນສະໄໝຂຶ້ນ) ໝາຍຄວາມວ່າໄດ້ປັບປຸງທີ່ຢູ່ອາໄສໃຫ້ແກ່ ປະຊາຊົນ ໒ ໘໐໐.໐໐໐ ຄົນ ໃຫ້ດີຂຶ້ນຂັ້ນພື້ນຖານ . ລະຫວ່າງປີ ໑໙໗໘ ແລະ ປີ ໑໙໘໐ ເພິ່ນຈະປັບປຸງທີ່ຢູ່ອາໄສໃຫ້ແກ່ປະຊາຊົນຕື່ມຂຶ້ນອີກ ໔.໗໐໐.໐໐໐ ຄົນ ບ່ອນການລົງມືປະຕິບັດ ໂຄງການດໍາເນີນກໍ່ສ້າງຢ່າງກວ້າງຂວາງ, ຊຶ່ງເປັນຫົວໃຈສໍາຄັນຂອງໂຄງການດໍາເນີນງານແຫ່ງນະໂຍບາຍທາງດ້ານ ສັງຄົມ . ເມື່ອເປັນຄືແນວນັ້ນ ໑/໔ ຂອງ ພົລເມືອງຢູ່ໃນ ສປປ ຈະໄດ້ມີທີ່ພັກພາອາໄສໃໝ່ຕື່ມຂຶ້ນອີກ .

- ໃນໄລຍະ ຕັ້ງແຕ່ ປີ ໑໙໗໐, ລາຍໄດ້ຕົວຈິງຂອງ ພົລເມືອງ ໄດ້ເພີ່ມຂຶ້ນໂດຍຄິດເປັນສ່ວນສະເລັ່ຍ ໔% ຕໍ່ປີ . ໃນຂນະທີ່ລາຍໄດ້ຂອງ ຊາວກັມມະກອນ ແລະ ພາລະກອນໄດ້ເພີ່ມຂຶ້ນ, ລາຄາເຄື່ອງໃຊ້ຂອງສອຍທີ່ຈໍາເປັນ, ອາຫານການກິນ, ຄ່າເຊົ່າເຮືອນ, ຄ່າຂົນສົ່ງ ແລະ ຄ່າບໍລິການອື່ນໆ ແມ່ນຢູ່ຄົງທີ່ ແລະ ບໍ່ແພງ .

- ໃນປີ ໑໙໗໐ <u>ລາຍຈ່າຍຂອງລັດ</u> ເພື່ອຄໍ້າຊູລາຄາ, ເພື່ອໃຊ້ຈ່າຍຄ່າວັທນະທັມ, ການສາທາລະນະສຸກ, ການຮັບປະກັນຕໍ່ສັງຄົມ, ກິຈການພັກຜ່ອນ ແລະ ກິລາ . ແມ່ນມີ ໖໐ ມາກ ຕໍ່ເດືອນ ສໍາລັບຄອບຄົວນຶ່ງທີ່ມີ ໔ ຄົນ, ປີ ໑໙໗໗ ຈະເພີ່ມຂຶ້ນເປັນ ໖໔໕ ມາກ ເງິນດັ່ງກ່າວນີ້ ແມ່ນເປັນເງິນອຸດໜູນຂອງແຕ່ລະຄອບຄົວ . (ລາຍໄດ້ປະຈໍາເດືອນໂດຍຄິດເປັນສ່ວນສະເລັ່ຍຂອງກັມມະກອນ ແລະ ພາລະກອນ ຟັດຈຸບັນແມ່ນ ໙໖໕ ມາກ ). ລະຫວ່າງປີ ໑໙໗໖ ແລະ ໑໙໘໐ ເພິ່ນຈະບອກເອົາເງິນກ້ອນນຶ່ງໄວ້ ຊຶ່ງມີຈໍານວນ ມີ໖໐ ກີມາກ ເພື່ອການໃຊ້ຈ່າຍຕ່າງໆໃນການຍົກລະດັບຊີວິດທາງດ້ານວັດຖຸ ແລະ ວັທນະທັມຂອງປະຊາຊົນ, ໃນນັ້ນ ໘໐ ກີ ເພື່ອການສຶກສາ, ໑໒໐ ກີ ເພື່ອການສາທາລະນະສຸກ ແລະ ຈຸດໝາຍປາຍທາງອື່ນໆທາງດ້ານສັງຄົມ, ໑໔໐ ກີ ເພື່ອອຸດໜູນຄວາມສະດວກສະບາຍຂອງຄ່າບໍລິໂພກ .

- ມາດຕະການຕ່າງໆກວ້າງຂວາງຕໍ່ສັງຄົມ ໄດ້ວາງອອກເພື່ອຊ່ວຍເຫຼືອຄອບຄົວໂດຍສະເພາະແມ່ນຄອບຄົວທີ່ມີລູກຫຼາຍ ເພື່ອຊ່ວຍເຫຼືອເດັກນ້ອຍໃຫ້ໄດ້ເຂົ້າໄປຢູ່ໃນສະຖານທີ່ລ້ຽງເດັກ ແລະ ໂຮງຮຽນອະນຸບານ, ເວົ້າໂດຍສລຸບແລ້ວກໍເພື່ອສ້າງເງື່ອນໄຂເພື່ອຮັບປະກັນໃຫ້ແກ່ຄວາມສົມບູນພູນສຸກຂອງຄອບຄົວ , ໂດຍສະເພາະແມ່ນ ແມ່ ແລະ ເດັກນ້ອຍ .

- ເພິ່ນໄດ້ເຮັດຫລາຍສິ່ງຫລາຍຢ່າງ ເພື່ອຮັບເອົາມາເປັນພາລະ ແລະ ຊ່ວຍເຫລືອທາງດ້ານການເງິນແກ່ພວກຜູ້ເຖົ້າ , ເມື່ອປີ ໑໙໗໐ , ເງິນເບັ້ຍບຳນານແມ່ນມີ ໔ ກີບ, ມາຮອດປີ ໑໙໗໗ ເງິນດັ່ງກ່າວໄດ້ສູງຂຶ້ນເຖິງ ໑໔,ມີ ກີ

ຄວາມຮັບປະກັນທາງດ້ານວັດຖຸ

ຢູ່ໃນປະເທດ ສັງຄົມນິຍົມ, ຄວາມກ້າວໜ້າທາງດ້ານເສດຖະກິດແມ່ນຕະຫລອດໄປ ເພື່ອຍົກລະດັບຄວາມຮັບປະກັນທາງດ້ານວັດຖຸຂອງທົ່ວປວງຊົນ . ຊາວອອກແຮງງານ ແມ່ນໄດ້ຊົມໃຊ້ໂດຍກົງໃນສິ່ງທີ່ຕົນໄດ້ຜະລິດຂຶ້ນມາ, ໂດຍສະເພາະແມ່ນຢູ່ໃນດ້ານທີ່ສຳຄັນໃຫ້ແກ່ການພັດທະນາຄົນ ເຊັ່ນ : ການສຶກສາ, ການ ສາທາລະນະສຸກ ແລະ ກິຈການທາງສັງຄົມ , ການສົ່ງເສີມວັດທະນາ, ນະໂຍບາຍຕໍ່ຄອບຄົວ, ການອອກກິນເບັ້ຍບຳນານ, ການພັກຜ່ອນ, ວັທນະທັມ ແລະ ການກິລາ . ໃນຂະນະທີ່ຂໍ້ສະດວກຂອງສັງຄົມນິຍົມເດັ່ນຂຶ້ນຢູ່ໃນຂແນງງານຕ່າງໆຂອງສັງຄົມ , ເພິ່ນກໍໄດ້ພິສູດເຫັນວ່າ, ຕາມທາດແທ້, ສັງຄົມນິຍົມໄດ້ຫັນທິດໄປຫາການຍົກລະດັບຊີວິດທາງດ້ານວັດຖຸ ແລະ ວັທນະທັມຂອງປະຊາຊົນ ພ້ອມທັງຄຸ້ມສົມບັດທາງດ້ານຊີວິດທີ່ຕິດພັນຢູ່ໃນລະບົບ ສັງຄົມນິຍົມ . ເພື່ອນດັ່ງເປົ້າໝາຍສຳຄັນທີ່ກຳນົດໄວ້ຢູ່ໃນກອງປະຊຸມໃຫຍ່ ຄັ້ງທີ ໓ ແລະ ໔ ຂອງພັກ ສອຍ ເປົ້າໝາຍນັ້ນໄດ້ຊີ້ໃຫ້ເຫັນເຖິງເສັ້ນທາງກ້າວເດີນ, ເສັ້ນທາງດັ່ງກ່າວນັ້ນໄດ້ຫລັ່ງມາຈາກການອອກແຮງງານຢ່າງມີສະຕິຂອງການປັບປຸງ ສັງຄົມ ແຫ່ງສັງຄົມນິຍົມ ໃຫ້ດີຂຶ້ນຢ່າງລຽນຕິດ . ເປັນຫຍັງຢູ່ໃນຂອບເຂດແຫ່ງນະໂຍບາຍດັ່ງກ່າວນັ້ນ, ເສັ້ນທາງ ແລະ ເປົ້າໝາຍຈຶ່ງສາມາດລວມຕົວເຂົ້າກັນໄດ້ຢ່າງເປັນເອກກະພາບ,ກໍເພາະວ່າບັນດາຜົນປໂຍດຂອງສັງຄົມແຫ່ງ ສັງຄົມນິຍົມ ໄດ້ມາບັນຈົບກັນກັບຜົນປໂຍດຂອງບຸກຄົນ . ເອກກະພາບຂອງນະໂຍບາຍເສດຖະກິດ ແລະ ສັງຄົມ ແມ່ນເປັນຈຸດພາຍລັກສະນະເດັ່ນແຫ່ງການສ້າງຕັ້ງສັງຄົມແຫ່ງສັງຄົມນິຂຍາຍຕົວ ແລະ ການສ້າງຕັ້ງນັ້ນຍິ່ງເດັ່ນຂຶ້ນອີກຢ່າງຈະແຈ້ງຕາມອັດຕາລ່ວງແຫ່ງຄວາມກ້າວໜ້າ .

## ໗/- ການເມືອງແຫ່ງຊາດ ແລະ ສາກົນຂອງພັກ ສອຍ

ປັດໄຈແຫ່ງຊາດ ແລະ ປັດໄຈສາກົນ ແມ່ນຕິດແທດກັນຢ່າງສົນິດແໜ້ນຢູ່ໃນດ້ານເມືອງຂອງ ພັກ ສອຍ, ຊຶ່ງເປັນພັກນຳພາຢູ່ໃນ ສປຢ ແລະ ເປັນພັກ ມາກ-ເລນິນ, ພັກໄດ້ຕີລາຄາຢູ່ສເມີວ່າບໍ່ຄວນຖືເອົາແບບຢ່າງເຂັ້ມງວດ ປັດໄຈແຫ່ງຊາດ ຫລື ປັດໄຈສາກົນ ແຕ່ວ່າຕ້ອງເຮັດໃຫ້ ໔ ປັດໄຈນີ້ເປັນເອກກະພາບກັບຢ່າງມີຜົນແບບກາຍຍະວິພາດ ເພື່ອພິທັກຮັກສາບັນດາຜົນປໂຍດຂອງຊົນຊັ້ນກັມມະກອນ . ເມື່ອເຫັນຄືແນວນັ້ນ, ການລຶບລ້າງຢ່າງປາສຈາກເງື່ອນໄຂທຸກເສດເຫລືອຂອງ ຈັກກະພັດນິຍົມ ແລະ ຟາດຊິດ ເຢັຽລະມັນ ແມ່ນມີຄວາມຈຳເປັນສຳລັບປະວັດສາດ ເຢັຽລະມັນ ແຕ່ພ້ອມດຽວກັນນັ້ນ ມັນກໍເປັນບັນຍັດທີ່ໄດ້ວາງອອກ ໂດຍຄວາມຮັບຜິດຊອບ ສາກົນ ຕໍ່ໜ້າປະຊາຊາດ ເອີຣົບ ແລະ ໂລກທັງມວນ . ໂດຍການສ້າງຕັ້ງ ສັງຄົມນິຍົມ ມາໄດ້ ໑໐ ປີ ແລ້ວ, ພັກ ສອຍ ໄດ້ຖືເອົາເງື່ອນໄຂແຫ່ງຊາດ ແຕ່ວ່າພ້ອມດຽວກັນນັ້ນກໍໄດ້ຖືເອົາລັກສະນະຂອງຍຸກສໄມເຮົາ ອັນເປັນຈຸດພາຍຜ່ານຂ້າມຈາກທຶນນິຍົມ ກ້າວຂຶ້ນສູ່ ສັງຄົມນິຍົມ , ແລກັນແອກເຊັນ, ສະມາຊິກ

ກົມການເມືອງ ຂອງ ຄະນະກົມມະການສູນກາງພັກ ສອຟ ໄດ້ຂຽນກ່ຽວກັບການພົວພັນກັນລະຫວ່າງຟັດໄຈ ແຫ່ງຊາດ ແລະ ສາກົນ ວ່າ :

" ນັບຕັ້ງແຕ່ ສປຢ ໄດ້ສ້າງຕັ້ງຂຶ້ນມາ, ພັກ ສອຟ ໄດ້ລົງມືປະຕິບັດຫຼາຍຢ່າງໃນຂອບເຂດ ແຫ່ງອຳນາດຂອງຕົນ ເພື່ອຮັບປະກັນໃຫ້ແກ່ການຂະຫຍາຍຕົວຂອງ ປະຊາທິປະໄຕ, ຄວາມກ້າວໜ້າ ແລະ ສັນຕິພາບ ຢູ່ໃນຂອບເຂດທົ່ວປະເທດ ເຢັຽລະມັນ . ພັກເຮົາ ໄດ້ຕໍ່ສູ້ຢ່າງແຂງແຮງ ແລະ ຊຽວຊານ ເພື່ອປະສົບຜົນສຳເລັດ, ແຕ່ວ່າເນື່ອງຈາກກຳລັງຂອງພວກທຶນຫຼາຍຊາດສາກົນໄດ້ລວມຫົວກັນຄັດຄ້ານຕ້ານຝືນ, ເນື່ອງຈາກການຈູງຊາທາງດ້ານກຳລັງ ລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມ ການວິວັດລັກສະນະກ້າວໜ້າ ເພື່ອຮັບໃຊ້ປະຊາຊົນ ເຢັຽລະມັນ ປາກົດວ່າມັນໃກ້ຈະ ... ເປັນສິ່ງທີ່ເປັນໄປບໍ່ໄດ້. ແຕ່ວ່າຝ່າຍຈັກກະພັດ ນິຍົມ ... ບໍ່ສາມາດຈະສ້າງຕັ້ງລະບົບຂູດຮີດຂຶ້ນໄດ້ຢູ່ໃນທົ່ວປະເທດ ເຢັຽລະມັນ . ຈົນສລຸບຈຶ່ງພວກ ຈັກກະພັດນິຍົມໄດ້ຖອດຖອນຈາກບັນຫາດັ່ງກ່າວນັ້ນ ກໍ່ຄືການສ້າງຕັ້ງລັດນຶ່ງຂຶ້ນຕ່າງຫາກ , ຄື ສສຢ. ຈົນສຳເລັດ ທີ່ຍິ່ງໃຫຍ່ແຫ່ງການຕໍ່ສູ້ຊົນຊັ້ນບົນດິນແດນ ເຢັຽລະມັນ ແມ່ນເປັນຄວາມກ້າວໜ້າຢ່າງໃຫຍ່ຫລວງທາງດ້ານ ປະວັດສາດ ເຊັ່ນ : ການສ້າງຕັ້ງລະບົບ ສັງຄົມນິຍົມ ຢູ່ໃນ ສປຢ . ປັດຈຸບັນນີ້, ບົນດິນແດນຂອງ ເຢັຽລະມັນ ມັນໄດ້ເກີດມີ ໒ ລັດ ຂຶ້ນ ຊຶ່ງມີລະບົບສັງຄົມແຕກຕ່າງກັນ ຄື ສປຢ ແລະ ສສຢ ອັນເປັນລັດ ທຶນນິຍົມ, ນອກນັ້ນບົນດິນແດນແຫ່ງນັ້ນຍັງໄດ້ເກີດມີ ໒ ປະຊາຊົນ ແລະ ໒ ຊາດ ຂຶ້ນ ຄືຊາດ ສັງຄົມນິຍົມ ແມ່ນຕັ້ງຢູ່ໃນ ສປຢ ແລະ ຊາດທຶນນິຍົມ ຕັ້ງຢູ່ ສສຢ. ພາກປະຕິບັດອັນເປັນປະວັດການຢູ່ບົນດິນແດນ ເຢັຽລະມັນ ໃນຊ່ວງທ້າຍ ນຶ່ງສ່ວນສີ່ ຂອງ ສັດຕະວັດນີ້ ສຸດທ້າຍມັນກໍ່ໄດ້ສອນໃຫ້ເຮົາຮູ້ຄວາມສຳຄັນທາງ ພົດແຫ່ງຜົນປະໂຫຍດຂອງຊົນຊັ້ນ ແລະ ການຈູງຊາທາງດ້ານກຳລັງທີ່ມີຢູ່ລະຫວ່າງ ຊົນຊັ້ນ ກ່ຽວກັບການວິວັດ ຂອງບັນດາຊາດ ."

( ອາຍຣາຍ, ແນກແລງ ສະບັບທີ ໑໐-໑໑, ໑໙໗໗ )

ໃນເງື່ອນໄຂດັ່ງກ່າວນັ້ນ, ພັກ ສອຟ ໄດ້ເຄື່ອນໄຫວຢ່າງແທດເໝາະກັບບົດຮຽນພື້ນຖານອັນເປັນປະວັດການ ດັ່ງກ່າວ ຊຶ່ງຢູ່ໃນບົດຮຽນດັ່ງກ່າວນັ້ນມັນໄດ້ບອກໃຫ້ຮູ້ວ່າ ການຕໍ່ສູ້ປົດປ່ອຍຊາດ ແລະ ສັງຄົມ ຂອງ ຊົນຊັ້ນ ກຳມະກອນ ສ່ວນໃຫຍ່ ແມ່ນຂຶ້ນກັບການຈູງຊາທາງດ້ານກຳລັງສາກົນ , ການເພີ່ມທະວີຄວາມແຮງຂອງກຳລັງ ສັງຄົມນິຍົມ ແລະ ຄວາມກ້າວໜ້າທາງດ້ານສັງຄົມ, ການໂຕ້ຕອບຕໍ່ ພວກທຶນຫຼາຍຊາດແຫ່ງຊາດ ແລະ ສາກົນ, ຈະແມ່ນຢູ່ໃນໄລຍະຕໍ່ສູ້ຈົນໄປຮອດບ່ອນໄຊຊະນະປະຕິວັດ ກໍ່ຄືໄລຍະແຫ່ງການສ້າງຕັ້ງ ສັງຄົມນິຍົມ , ມັນຂຶ້ນກັບເງື່ອນໄຂທາງດ້ານພາວະວິໄສຊຶ່ງການຕໍ່ສູ້ຂອງຊົນຊັ້ນກຳມະກອນ ມີລັກສະນະກວມລວມທັງເປັນການຕໍ່ສູ້ ເພື່ອຊາດ ແລະ ສາກົນ .

## ຄວາມສາມັກຄີກັບຫຼາກກຳລັງທີ່ກ້າວໜ້າ

ຕັ້ງແຕ່ເຖິງນານມາແລ້ວ, ສປຢ, ແມ່ນເປັນຈຸດເລັ່ງໃຫ້ແກ່ການປິດລ້ອມທາງດ້ານການທູດຈາກ ຝ່າຍ ຈັກກະພັດນິຍົມ . ແມ່ນຕົ້ນປີ ໑໙໗໐ ຊຶ່ງ ສປຢ ໄດ້ບຸກທະລຸນບອນ ເຈາະການປິດລ້ອມຢ່າງເດັດຂາດ

ເພື່ອເຮັດໃຫ້ມີການຮັບຮູ້ດ້ານການທູດທົ່ວໄປ , ສິ່ງດັ່ງກ່າວ ແມ່ນເນື່ອງມາຈາກຂະບວນປ່ຽນແປງທາງດ້ານການຈັດຊາກຳລັງ , ຫລັກການແຫ່ງການຢູ່ຮ່ວມກັນໂດຍສັນຕິໄດ້ຖືກວາງອອກມາໄວ້ນັບມື້ເຖິງຂັ້ນຢູ່ໃນບັນຫາແຫ່ງການພົວພັນລະຫວ່າງຊາດ ແລະ ພວກຈັກກະພັດນິຍົມ ໄດ້ຖືກບີບບັງຄັບໃຫ້ຮັບຮູ້ເຖິງສະພາບຄວາມເປັນຈິງຢູ່ໃນ ເອີຣົບ , ລວມທັງການຂະຫຍາຍຕົວຂອງ ສປຢ ແລະ ສາຍແດນທີ່ເກີດຂຶ້ນມາ ພາຍຫລັງການວິວັດ ຫລັງສົງຄາມ . ສປຢ ບໍ່ໄດ້ຫລົງລືມຈັກເທື່ອ ໃນໄລຍະແຫ່ງການປິດລ້ອມທາງດ້ານການເມືອງ ໂດຍພວກ ຈັກກະພັດນິຍົມ, ສະຫະພາບໂຊວຽດ ແລະ ລັດສັງຄົມນິຍົມອື່ນໆ ໄດ້ສາມັກຄີກັນກັບປະເທດຂອງພວກເຮົາ, ຮ່ວມກັບກຳລັງທີ່ກ້າວໜ້າທັງມວນຢູ່ໃນໂລກ . ພ້ອມດຽວກັນນັ້ນ, ສປຢ ກໍ່ໄດ້ຮັບຄວາມຍູ້ໜູນຈາກຄວາມສາມັກຄີສາກົນ, ປັດຈຸບັນ ສປຢ ໄດ້ສະແດງຄວາມສາມັກຄີຂອງຕົນອອກມາຢ່າງສຸດຄວາມສາມາດກັບທຸກກຳລັງ ຊຶ່ງທຳການຕໍ່ສູ້ຕ້ານຕໍ່ ຈັກກະພັດນິຍົມ, ເພື່ອປະຊາທິປະໄຕ, ຄວາມກ້າວໜ້າທາງສັງຄົມ ແລະ ສັນຕິພາບ ຢູ່ໃນທະວີບຕ່າງໆ .

ເອຣິກຮອນເນັກເກີ ໄດ້ປະກາດກ່ຽວກັບເລື່ອງນີ້ ໃນກອງປະຊຸມໃຫຍ່ ຂອງພັກ ສອຢ ຄັ້ງທີ ໙ ວ່າ:

- ສປຢ ຈະສືບຕໍ່ຢືນຢູ່ໃນຖັນແຖວຄຽງຂ້າງຂອງພວກທີ່ທຳການຕໍ່ສູ້ຕ້ານຕໍ່ ຈັກກະພັດນິຍົມ ແລະ ລັດທິລ່າຫົວເມືອງຂຶ້ນ ເພື່ອການປົດປ່ອຍຊາດ ຢູ່ໃນທຸກທະວີບ ... ຍ້ອນການຂະຫຍາຍ ແລະ ການປັບປຸງຄວາມສຳພັນທາງການເມືອງ ແລະ ເສດຖະກິດຢ່າງເພີ່ມເຕີມ , ພວກເຮົາສັບສະໜູນການຕໍ່ສູ້ຂອງປະເທດທີ່ຖືກປົດປ່ອຍ ແລະ ປະເທດທີ່ພວມຕໍ່ສູ້ປົດປ່ອຍ ເພື່ອເອກະລາດທາງດ້ານເສດຖະກິດ, ການສຳເລັດຜົນແຫ່ງພາລະກິດ ການເມືອງ, ເສດຖະກິດ ແລະ ສັງຄົມຂອງພວກເຂົາເຈົ້າ .

ພວກເຮົາຖືວ່າເປັນສິ່ງຈຳເປັນທີ່ຕ້ອງລົບລ້າງການແບ່ງອອກສາກົນຊຶ່ງພວກຈັກກະພັດນິຍົມ ເປັນຜູ້ວາງອອກ ແລະ ໃຊ້ໄວ້ເປັນເຄື່ອງຂູດຮີດຂອງລັດທິລ່າຫົວເມືອງຂຶ້ນແບບໃໝ່ ແລະ ໃຫ້ຈັດຕັ້ງການພົວພັນເສດຖະກິດສາກົນບົນພື້ນຖານແຫ່ງຄວາມສະເໝີພາບທາງດ້ານສິດທິ. ໂດຍອີງໃສ່ການຊັງຊາທາງດ້ານກຳລັງ ປັດຈຸບັນພາລະກິດດັ່ງກ່າວແມ່ນຊອບດ້ວຍເຫດຜົນ ."

ນະໂຍບາຍຂອງພັກ ສອຢ ແມ່ນມີຈຸດປະສົງກໍ່ສ້າງທຸກຄວາມສາມາດ, ຍ້ອນການເພີ່ມທະວີຄວາມແຮງຂອງ ສປຢ ໃນທຸກດ້ານເພື່ອປະກອບສ່ວນຊ່ວຍເຫລືອຢ່າງມີປະສິດທິພາບໃຫ້ແກ່ການຕໍ່ສູ້ປົດປ່ອຍຊາດ ແລະ ສັງຄົມຂອງປະຊາຊາດ .

## ຄວາມຈົງຮັກພັກດີຕໍ່ ລັດທິສາກົນກຳມະຊີບ

ເນື່ອງຈາກວ່າ ພັກ ສອຢ ໄດ້ຖືກຊີ້ນຳໂດຍຜົນປະໂຫຍດທົ່ວໄປຂອງສັງຄົມນິຍົມ ແລະ ກອມມູນິດ ໃນການວິໄຈບັນດາປັດໄຈແຫ່ງຊາດ ແລະ ສາກົນ ແຫ່ງການຕໍ່ສູ້ຂອງຊົນຊັ້ນກຳມະກອນ, ພັກດັ່ງກ່າວ ໄດ້ຢືນຢູ່



24 / VII

(2)

ຢ່າງເດັດດ່ຽວ ໃນ ລັດທິສາກົນກັມມະຊີບ. ບົນພື້ນຖານດັ່ງກ່າວນີ້, ພັກ ສອຟ ໄດ້ເສີມຂຍາຍ ແລະ ປັບປຸງສາຍພົວພັນຂອງຕົນ ຖານອ້າຍນ້ອງຢ່າງແໜ້ນແຫນ້ນກັບທຸກ ພັກ ອ້າຍນ້ອງ ກອມມູຍນິດ ແລະ ກັມມະກອນ . ພັກ ສອຟ ໄດ້ດຳເນີນນະໂຍບາຍຂອງຕົນຈາກສັດຈະທັມແຫ່ງປ໊ວດສາດທີ່ວ່າ ຂະບວນວິວັດແຫ່ງການປະຕິວັດໂລກ ໄດ້ອຳນວຍຄວາມສະດວກໃຫ້ແກ່ປະຊາຊາດນັບນີ້ຫລວງຫລາຍ ເພື່ອສືບຕໍ່ກ້າວເດີນຕາມເສັ້ນທາງຕ່າງໆ ກ້າວຂື້ນສູ່ ສັງຄົມນິຍົມ ແລະ ແຕ່ລະຄວາມລົບພ້າຂອງການປະຕິວັດດັ່ງກ່າວ ເຮັດໃຫ້ລັດທິ ມາກ-ເລນິນ ມີຄວາມຮັ່ງມີດ້ວຍປັດໄຈໃໝ່ ແລະ ປະເສີດ (2). ໃນເວລາດຽວກັນນັ້ນ, ປົດຣຽນໄດ້ຊີ້ໃຫ້ເຫັນວ່າ ການຕໍ່ສູ້ ຂອງຂະບວນການກອມມູຍນິດ ສາກົນ ພາຍເຖິງການກະທຳສາກົນ ນັບມື້ແໜ້ນແຫນ້ນຂອງ ຊົນຊັ້ນ ກັມມະກອນ ແລະ ຂອງທຸກກຳລັງ ຕ້ານຕໍ່ຈັກກະພັດນິຍົມ. ບັນຫາອັນເປັນຊີວິດຈິດໃຈຕໍ່ມວນມະນຸດແມ່ນການເກືອດຫ້າມສົງຄາມ ນິວເຄລັຽ, ການຢຸດເຊົາແຂ່ງກັນສ້າງອາວຸດ , ການວາງມາດຕະການທີ່ເໝາະສົມ ເພື່ອການກຳນົດ ອາວຸດ ແລະ ການລົດອາວຸດ ສິ່ງເຫລົ່ານີ້ມັນພາຍເຖິງການກະທຳສາກົນ ຍິ່ງກວ່າເວລາໃດທັງໝົດຂອງຊົນຊັ້ນກັມມະກອນ ແລະ ຂອງທຸກກຳລັງອື່ນໆ ຕ້ານຕໍ່ ຈັກກະພັດນິຍົມ .

ເມື່ອເວົ້າເຖິງການພົວພັນເບື້ອງພາຍແຫ່ງຊາດ ແລະ ສາກົນຢູ່ໃນນະໂຍບາຍຂອງ ພັກສອຟ, ເອຣິກຮອນເນັກເກີ ໄດ້ປະກາດຕໍ່ໜ້າກອງປະຊຸມໃຫຍ່ຂອງ ພັກ ຄັ້ງທີ່ ໙ ວ່າ :

- ຊາວກອມມູຍນິດ ຕ້ອງການໃຫ້ມະນຸດທຸກຄົນໃຊ້ຊີວິດຢູ່ຢ່າງເບີກບານ, ປົດເປື້ອງອອກຈາກຄວາມຢ້ານກົວ ແລະ ຄວາມອຶດຫາກັງວົນ . ເງື່ອນໄຂອັນນຶ່ງແມ່ນໃຫ້ພວກເຂົາເຈົ້າໄດ້ຢູ່ໃນບັນຍາກາດແຫ່ງຄວາມປອດໄພ . ເມື່ອເປັນຄືແນວນັ້ນ ດ້ານພາຍໃນ ເພື່ອເຮົາໄດ້ກໍ່ສ້າງຄວາມປອດໄພທາງດ້ານວັດຖຸ ແລະ ທາງດ້ານພາຍນອກ ນະໂຍບາຍຂອງພວກເຮົາແມ່ນມີຈຸດປະສົງ ເພື່ອພິທັກຮັກສາສັນຕິພາບ . ຄວາມປອດໄພພາຍໃນແມ່ນແຍກຕົວອອກຈາກຄວາມປອດໄພພາຍນອກບໍ່ໄດ້ . ກຳລັງຂອງຄ້າຍ ສັງຄົມນິຍົມ ແມ່ນເປັນເສົາຄ້ຳທີ່ມີສະຖຽນລະພາບໃຫ້ແກ່ສັນຕິພາບຢູ່ໃນໂລກ ເພາະວ່າກຳລັງ ແລະ ຄວາມເຂັ້ມແຂງຂອງ ສັງຄົມນິຍົມແມ່ນມີໄວ້ເພື່ອຮັບໃຊ້ສັນຕິພາບຢູ່ໃນໂລກ . ເບິ່ງໃນດ້ານປື້ນຂອງບັນຫາ, ສັນຕິພາບແມ່ນອຳນວຍຄວາມສະດວກໃຫ້ແກ່ ສັງຄົມນິຍົມ ເພື່ອເຮັດໃຫ້ຂໍ້ສະດວກຂອງຕົນໄດ້ແຜ່ດອກອອກຜົນຢ່າງເຕັມປ່ຽມ. ນັ້ນມັນແມ່ນເຮັດໃຫ້ຫລັກການເບື້ອງຕົ້ນແຫ່ງການເມືອງຕ່າງປະເທດຂອງພວກເຮົາປະກົດເປັນຈິງຂື້ນ, ຄື ຮັບປະກັນບັນດາເງື່ອນໄຂທີ່ເໝາະສົມໃຫ້ແກ່ການສ້າງຕັ້ງສັງຄົມນິຍົມ ແລະ ກອມມູຍນິດ ຊຶ່ງຮັບໃຊ້ ລັດທິສັງຄົມນິຍົມ ພວກເຮົາ ແລະ ທົ່ວຄ້າຍສັງຄົມນິຍົມ ແລະ ຄວາມປອດໄພຂອງພົລເມືອງຂອງປະເທດອື່ນໆ.

໙/- <u>ສ້າງພັນທະພາບຢ່າງຕິດແທດກັບ ສະຫະພາບໂຊວຽດ</u>

ພັນທະພາບລະຫວ່າງ ສະຫະພາບໂຊວຽດ ແລະ ສປຢ ແມ່ນໄດ້ຖືກຫລໍ່ຫລອມຂື້ນມາໃນໄລຍະແຫ່ງການຕໍ່ສູ້ ເພື່ອການກໍ່ສ້າງຕ້ານຕໍ່ ຟາດຊິດ ແລະ ເພື່ອປະຊາທິປະໄຕ ແລະ ໄຊຊະນະຂອງການປະຕິວັດ ສັງ

ຢ່າງເດັດດ່ຽວ ໃນ ລັດທິສາກົນກັມມະຊີບ. ບົນພື້ນຖານດັ່ງກ່າວນີ້, ພັກ ສອຢ ໄດ້ເສີມຂຍາຍ ແລະ ປັບປຸງສາຍພົວພັນຂອງຕົນ ຖານອ້າຍນ້ອງຢ່າງເພັ້ນເຕັມພັບຫຼາ ພັກ ອ້າຍນ້ອງ ກອມມຸຍນິດ ແລະ ກັມມະກອນ . ພັກ ສອຢ ໄດ້ດຳເນີນນະໂຍບາຍຂອງຕົນຈາກສັດຈະທັມແຫ່ງປະວັດສາດທີ່ວ່າ ຂະບວນວິວັດແຫ່ງການປະຕິວັດໂລກ ໄດ້ອຳນວຍຄວາມສະດວກໃຫ້ແກ່ປະຊາຊາດນັບມື້ຫລວງຫລາຍ ເພື່ອສືບຕໍ່ກ້າວເດີນຕາມເສັ້ນທາງຕ່າງໆ ກ້າວຂື້ນສູ່ ສັງຄົມນິຍົມ ແລະ ແຕ່ລະຄວາມຈີບພາຂອງການປະຕິວັດດັ່ງກ່າວ ເຮັດໃຫ້ລັດທິ ມາກ-ເລນິນ ມີຄວາມຮັ່ງມີດ້ວຍປັດໄຈໃໝ່ ແລະ ປະເສີດ(2) ໃນເວລາດຽວກັນນັ້ນ, ບົດຮຽນໄດ້ຊີ້ໃຫ້ເຫັນວ່າ ການຕໍ່ສູ້ ຂອງຂະບວນການກອມມຸຍນິດ ສາກົນ ພາຍເຊີງການກະທຳສາກົນ ນັບມື້ເພັ້ນເຕັ່ມຂອງ ຈິນຊົ້ນ ກັມມະກອນ ແລະ ຂອງໝູ່ກຳລັງ ຕ້ານຕໍ່ຈັກກະພັດນິຍົມ. ບັນຫາອັນເປັນຊີວິດຈິດໃຈຕໍ່ມວນມະນຸດແມ່ນການເກືອດຫ້າມສົງຄາມ ນິວເຄລັຽ, ການຢຸດເຊົາແຂ່ງກັນສ້າງອາວຸດ , ການວາງມາດຕະການທີ່ເໝາະສົມ ເພື່ອການກຳນົດ ອາວຸດ ແລະ ການລົດອາວຸດ ສິ່ງເຫລົ່ານັ້ນພາຍເຊີງການກະທຳສາກົນ ຍິ່ງກວ່າເວລາໃດທັງໝົດຂອງຈິນຊົ້ນກັມມະກອນ ແລະ ຂອງໝູ່ກຳລັງອື່ນໆ ຕ້ານຕໍ່ ຈັກກະພັດນິຍົມ .

ເມື່ອເວົ້າເຖິງການພົວພັນເຢື້ພາຍແຫ່ງຊາດ ແລະ ສາກົນຢູ່ໃນນະໂຍບາຍຂອງ ພັກສອຢ, ເອຣິກຮອນເນັກເກີ ໄດ້ປະກາດຕໍ່ໜ້າກອງປະຊຸມໃຫຍ່ຂອງ ພັກ ຄັ້ງທີ ໗ ວ່າ :

- ຊາວກອມມຸຍນິດ ຕ້ອງການໃຫ້ມະນຸດທຸກຄົນໃຊ້ຊີວິດຢູ່ຢ່າງເບີກບານ, ປົດເປື້ອງອອກຈາກ ຄວາມຢ້ານກົວ ແລະ ຄວາມວິຕົກກັງວົນ . ເງື່ອນໄຂອັນທີ່ໜື່ງແມ່ນໃຫ້ພວກເຂົາເຈົ້າໄດ້ ຢູ່ໃນບັນຍາກາດແຫ່ງຄວາມປອດໄພ . ເມື່ອເປັນຄືແນວນັ້ນ ດ້ານພາຍໃນ ເພື່ອເຮົາໄດ້ ກໍ່ສ້າງຄວາມປອດໄພທາງດ້ານວັດຖຸ ແລະ ທາງດ້ານພາຍນອກ ນະໂຍບາຍຂອງພວກເຮົາ ແມ່ນມີຈຸດປະສົງ ເພື່ອພິທັກຮັກສາສັນຕິພາບ . ຄວາມປອດໄພພາຍໃນແມ່ນແຍກຕົວອອກຈາກ ຄວາມປອດໄພພາຍນອກບໍ່ໄດ້ . ກຳລັງຂອງຄ້າຍ ສັງຄົມນິຍົມ ແມ່ນເປັນເສົາຄ້ຳທີ່ມີສະຖຽນລະພາບໃຫ້ແກ່ສັນຕິພາບຢູ່ໃນໂລກ ເພາະວ່າກຳລັງ ແລະ ຄວາມເຂັ້ມແຂງຂອງ ສັງຄົມນິຍົມ ແມ່ນມີໄວ້ເພື່ອຮັບໄຊ້ສັນຕິພາບຢູ່ໃນໂລກ . ເບິ່ງໃນດ້ານພື້ນຂອງບັນຫາ, ສັນຕິພາບແມ່ນ ອຳນວຍຄວາມສະດວກໃຫ້ແກ່ ສັງຄົມນິຍົມ ເພື່ອເຮັດໃຫ້ຂໍ້ສະດວກຂອງຕົນໄດ້ແຜ່ດອກອອກຜົນຢ່າງເຕັມປ່ຽມ. ນັ້ນນັ້ນແມ່ນເຮັດໃຫ້ຫລັກການເບື້ອງຕົ້ນແຫ່ງການເມືອງຕ່າງປະເທດຂອງ ພວກເຮົາປະກົດເປັນຈິງຂື້ນ, ຄື ຮັບປະກັນບັນດາເງື່ອນໄຂທີ່ເໝາະສົມໃຫ້ແກ່ການສ້າງຕັ້ງ ສັງຄົມນິຍົມ ແລະ ກອມມຸຍນິດ ຊື່ງຮັບໃຊ້ ລັດທິສັງຄົມນິຍົມ ພວກເຮົາ ແລະ ທົ່ວຄ້າຍສັງຄົມນິຍົມ ແລະ ຄວາມປອດໄພຂອງພົລເມືອງຂອງປະເທດອື່ນໆ.

໗/- ສ້າງພັນທະພາບຢ່າງຕິດແທດກັບ ສະຫະພາບໂຊວຽດ

ພັນທະພາບລະຫວ່າງ ສະຫະພາບໂຊວຽດ ແລະ ສປປ ແມ່ນໄດ້ຖືກຫລໍ່ຫລອມຂື້ນມາໃນໄລຍະແຫ່ງການຕໍ່ສູ້ ເພື່ອການກົດສ້າງຕ້ານຕໍ່ ຟາດຊິດ ແລະ ເພື່ອປະຊາທິປະໄຕ ແລະ ໄຊຊະນະຂອງການປະຕິວັດ ສັງ

ຄົມມິວນິດ ບົນດິນແດນ ເຮັງລະມັນ . ໂດຍໄດ້ໂຄ່ນລົ້ມພວກ ຟາດຊິດ ຮິດແລ ລົງ, ສະຫະພາບໂຊວຽດ ໄດ້ສ້າງເງື່ອນໄຂພື້ນຖານພາຍນອກທີ່ອຳນວຍຄວາມສະດວກໃຫ້ແກ່ຊົນຊັ້ນກຳມະກອນ ນຳພາໂດຍ ພັກສອຍ. ພົນທະມິດຂອງຫຼາຍຊົນຊັ້ນອື່ນໆ ແລະ ຊຸມຊົນຂອງປະຊາຊົນ ເພື່ອສ້າງຕັ້ງສັງຄົມນິຍົມ. ຄັ້ງພັກສອຍ ໄດ້ບັນທຶກໄວ້ຢູ່ໃນໂຄງການດຳເນີນງານຂອງຕົນ ເມື່ອປີ ໑໙໔໖, ໃນໄລຍະແຫ່ງການຕໍ່ສູ້ດັ່ງກ່າວເພື່ອໄຂຂໍ້ຄຶດເອົາບົດຮຽນທົ່ວໄປຂອງມະຫາປະຕິວັດ ສັງຄົມນິຍົມ ເດືອນ ຕຸລາ ຢູ່ໃນ ສະຫະພາບໂຊວຽດ ເປັນແບບຢ່າງ , ພັກສອຍ ໄດ້ນຳເອົາບົດຮຽນນັ້ນມາໃຊ້ ແບບປະດິດຄິດສ້າງຕາມເງື່ອນໄຂແຫ່ງປະວັດສາດຕົວຈິງໂດຍຖືເອົາຈຸດພິເສດ ແລະ ລັກສະນະທາງຊາດ . ພັກ ໄດ້ປະສົບຜົນສຳເລັດຢ່າງເຕັມປ່ຽມ ໂດຍອີງໃສ່ການສ້າງຕັ້ງ ສັງຄົມນິຍົມ ຢູ່ໃນ ສປຢ, ພັກສອຍ ສາມາດຢືນຢັນໄດ້ວ່າບົດຮຽນທີ່ສະສົມເອົາໄວ້ໂດຍ ຜົວ ຢ ນັບຕັ້ງແຕ່ມີອຳນາດໂຊວຽດ, ມັນບໍ່ແມ່ນເປັນເລື່ອງທີ່ກ່ຽວພັນສະເພາະ ຣັດເຊຍ . ດັ່ງສັດຕູຂອງ ສັງຄົມນິຍົມ ໄດ້ກ່າວອ້າງມາ ແລະ ບໍ່ມີຄຸນຄ່າສຳລັບປະເທດອື່ນໆ, ແຕ່ວ່າບົນພື້ນຖານຂອງລັດທິ ມາກ-ເລນິນ ຄຸນຄ່າທົ່ວໄປຂອງມັນແມ່ນໄດ້ຖືກຢືນຢັນອອກມາ. ມັນກ່ຽວພັນສະເພາະບັນຫາ ພິຊິດອຳນາດທາງດ້ານການເມືອງ ໂດຍຊົນຊັ້ນກຳມະກອນ, ການສ້າງຕັ້ງ ສັງຄົມນິຍົມ ຢູ່ໃນທຸກພາກສ່ວນຂອງສັງຄົມ ແລະ ແຕ່ລະໄລຍະຂອງການຂະຫຍາຍຕົວ . ແມ່ນເນື່ອງຈາກສະພາບການດັ່ງກ່າວ ເອຣິດຮອນເນັກເກີ ໄດ້ປະກາດຢູ່ໃນກອງປະຊຸມໃຫຍ່ ຄັ້ງທີ ໗ ຂອງພັກສອຍ ດັ່ງນີ້ :

" ພັນທະພາບຖານອ້າຍນ້ອງ ແລະ ທຳລາຍບໍ່ໄດ້ກັບ ສະຫະພາບໂຊວຽດ, ການນຳເອົາປະເທດເຮົາເຂົ້າໄປຢູ່ໃນຄ້າຍ ສັງຄົມນິຍົມ ຢ່າງເດັດດ່ຽວແມ່ນເປັນ ແລະ ຈະເປັນພື້ນຖານຢ່າງແໜ້ນແຫນ້ນຂອງຄວາມກ້າວໜ້າຂອງພວກເຮົາ ໃນໄລຍະການສ້າງຕັ້ງ ສັງຄົມນິຍົມ ແລະ ການກະທຳຕໍ່ໜ້າສາກົນຂອງພວກເຮົາ . ພັນທະພາບຂອງ ສັງຄົມນິຍົມ ຂອງພວກເຮົາ ແມ່ນແບບໃໝ່ຂັ້ນຮາກຖານ . ມັນໄດ້ສ້າງຂຶ້ນບົນພື້ນຖານ ສັງຄົມເສດຖະກິດ ແລະ ການເມືອງແບບເອກກະລັກສະນະ , ບົນ ອຸດົມການ ມາກ-ເລນິນ ອັນດຽວ, ມີເປົ້າໝາຍ ກອມມູນິດ ອັນດຽວ ແລະ ລັດທິສາກົນກຳມະຊີບ .

ພວກເຮົາມີຄວາມພູມໃຈທີ່ສຸດ, ທີ່ງການຮ່ວມມືກັບ ສະຫະພາບໂຊວຽດ ໄດ້ມັດແໜ້ນເຂົ້າກັນ ແລະ ກັບກາຍມາເປັນສິ່ງທີ່ມີປະສິດທິພາບທີ່ສຸດ . ພວກເຮົາມີຄວາມພາກພູມໃຈທີ່ສຸດ ທີ່ງການລວມມືດັ່ງກ່າວໄດ້ແຜ່ຂະຫຍາຍອອກໄປ ນັບຕັ້ງແຕ່ນີ້ເປັນຕົ້ນໄປ ທົ່ວທຸກພາກສ່ວນຂອງ ສັງຄົມ ຂອງປະເທດເຮົາ . ມັນໄດ້ຝັງຮາກຂອງມັນລົງເລິກ ເຂົ້າໄປຢູ່ໃນຊີວິດຂອງພົລເມືອງຂອງພວກເຮົາ . ການຊາບຊຶ້ງຄວາມສາມາດຕ່າງໆ ແລະ ການສຶກສາຂອງປະເທດພວກເຮົາເຂົ້າກັນ ເພື່ອສຳເລັດພາລະກິດອັນຍິ່ງໃຫຍ່ລວມກັນ ໃນອະນາຄົດອັນກ້າວໄກແມ່ນບັນຫາທີ່ເປັນທິດທາງພື້ນຖານ . ການເຂົ້າມາຢູ່ໃກ້ຊິດຕິດແທດກັນຂອງ ຊາດສັງຄົມນິຍົມພວກເຮົາ ບັດນີ້ເປັນເລື່ອງຈິງຂຶ້ນມາຢູ່ເລື້ອຍໆໃນຊີວິດ . "

ສປຢ ແລະ ສ.ພ.ຊ.ວ. ແມ່ນໄດ້ມັດແໜ້ນເຂົ້າກັນດ້ວຍສິນທິສັນຍາມິດຕະພາບ, ການຮ່ວມມື ແລະ ການຊ່ວຍ



(3)